ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ

ເອກະສານລາຍງານການເງິນແບບແຍກກິດຈະການ

ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2025

ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ

ສາລະບານ

	ໜ້າ
ຂໍ້ມູນທົ່ວໄປ	1 - 3
ບົດລາຍງານຂອງຄະນະອຳນວຍການ	4
ບົດລາຍງານຂອງນັກກວດສອບອິດສະຫຼະ	5 - 6
ໃບລາຍງານຖານະການເງິນແບບແຍກກິດຈະການ	7- 8
ໃບລາຍງານຜົນການດຳເນີນງານແບບແຍກກິດຈະການ	9
ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງແບບແຍກກິດຈະການ	10
ໃບລາຍງານກະແສເງິນສົດແບບແຍກກິດຈະການ	11 - 12
ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນແບບແຍກກິດຈະການ	13 - 40

ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ

ຂໍ້ມູນທົ່ວໄປ

ບໍລິສັດ

ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ ("ບໍລິສັດ") ເຊິ່ງກ່ອນໜ້ານີ້ແມ່ນ ບໍລິສັດ ຊີມັງລາວ ມະຫາຊົນ ແລະ ບໍລິສັດ ຊີມັງລາວ ຈຳກັດ, ໄດ້ຖືກສ້າງຕັ້ງຂຶ້ນຕາມກົດລະບຽບພາຍໃນຂອງບໍລິສັດທີ່ເຊັນຮັບຮອງ ທີ່ນະຄອນຫຼວງວຽງຈັນ, ສປປ ລາວ ໃນວັນ ທີ 15 ທັນວາ 1998 ລະຫວ່າງ ລັດວິສາຫະກິດພັດທະນາກະສິກຳ-ອຸດສາຫະກຳ ແລະ ບໍລິການຂາອອກ-ຂາເຂົ້າ ກັບ ບໍລິສັດຮ່ວມມືສາກົນດ້ານເສດຖະກິດ-ເຕັກນິກຢຸນນານ ສປ ຈີນ.

ໃນວັນທີ 14 ກຸມພາ 2018, ບໍລິສັດໄດ້ຮັບໜັງສືຢັ້ງຢືນຜົນສຳເລັດການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນຄັ້ງທຳອິດ (IPO) ເລກທີ 0008/ຕລຊລ ອອກໂດຍ ຄະນະກຳມະການຄຸ້ມຄອງຫຼັກຊັບ, ເຊິ່ງບໍລິສັດໄດ້ດຳເນີນການສະເໜີຂາຍຮຸ້ນຕໍ່ສາທາລະນະ ໂດຍມີຮຸ້ນຂອງ ບໍລິສັດຈຳນວນ 40,004,000 ຮຸ້ນ (ພາຍໃຕ້ຊື່ຫຍໍ້ "ບຊລ") ເຊິ່ງໄດ້ຖືກຈົດທະບຽນຢ່າງເປັນທາງການໃນຕະຫຼາດຫຼັກຊັບລາວ.

ໃນວັນທີ 2 ພຶດສະພາ 2023, ບໍລິສັດໄດ້ຮັບໃບອະນຸຍາດລົງທຶນສະບັບໃໝ່ ເລກທີ 119.2023/ກຜທ, ອອກໂດຍ ກະຊວງແຜນການ ແລະ ການລົງທຶນ ເຊິ່ງປ່ຽນແປງກິດຈະກຳຫຼັກທາງທຸລະກິດຂອງບໍລິສັດ. ກິດຈະກຳຫຼັກຂອງບໍລິສັດໄດ້ປ່ຽນຈາກການຜະລິດ, ການຂາຍ ສິ່ງ ແລະ ການຂາຍຍ່ອຍຊີມັງ ແລະ ຜະລິດຕະພັນຊີມັງອື່ນໆທີ່ກ່ຽວຂ້ອງ ມາເປັນການທ່ອງທ່ຽວ (ຂາເຂົ້າ – ຂາອອກ) ແລະ ການກໍ່ສ້າງ ຕຶກອາຄານຄອນໂດສຳລັບຈຳໜ່າຍ.

ໃນວັນທີ 30 ຕຸລາ 2023, ບໍລິສັດໄດ້ຮັບໃບທະບຽນວິສາຫະກິດສະບັບລ່າສຸດ ເລກທີ 3330/ຈທອ ຈາກກະຊວງອຸດສາຫະກຳ ແລະ ການຄ້າ ໄດ້ອອກໃບທະບຽນວິສາຫະກິດສຳລັບການປ່ຽນຊື່ຂອງບໍລິສັດຈາກ ບໍລິສັດ ຊີມັງລາວ ມະຫາຊົນ ມາເປັນ ກຸ່ມບໍລິສັດ ທ່ອງ ທ່ຽວວັດທະນະທຳລາວ ມະຫາຊົນ.

ໃນວັນທີ 24 ມິຖຸນາ 2025, ບໍລິສັດໄດ້ຮັບໃບອະນຸຍາດດຳເນີນທຸລະກິດຄອນໂດມິນຽມຈາກກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ເຊິ່ງໄດ້ອະນຸຍາດໃຫ້ບໍລິສັດດຳເນີນກິດຈະການທີ່ກ່ຽວຂ້ອງກັບຄອນໂດມິນຽມເພື່ອຂາຍ.

ໂຄງຮ່າງການຖືຮຸ້ນຂອງບໍລິສັດ ນະວັນທີ 31 ທັນວາ 2025 ມີລາຍລະອຽດດັ່ງນີ້:

ຜູ້ຖືຮຸ້ນ	*ຈຳນວນຮຸ້ນ*	*ເປີເຊັນ*
Yunnan Hengshi Chengrui Holdings Co., Ltd (ກ່ອນໜ້ານີ້ແມ່ນໃນນາມ Yunnan Qianhan Technology Network Limited ("Yunnan Qianhan"))	14,280,000	35.696%
ລັດວິສາຫະກິດພັດທະນາກະສິກຳ-ອຸດສາຫະກຳ ແລະ ບໍລິການຂາອອກ-ຂາເຂົ້າ (DAI)	13,720,000	34.297%
ບໍລິສັດ ຫຼັກຊັບລາວ - ຈີນ ຈຳກັດ (LCS)	7,547,800	18.868%
ບໍລິສັດ ມະຫາຊົນ ແລະ ນັກລົງທຶນ ອື່ນໆ	4,456,200	11.139%
	40,004,000	

ສຳນັກງານໃຫຍ່ທີ່ໄດ້ລົງທະບຽນຂອງບໍລິສັດຕັ້ງຢູ່ ບ້ານໂພນພະເນົາ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ. ບໍລິສັດຍັງ ມີໂຮງງານຊີມັງວັງວຽງ ຫຼັງ 2 ຢູ່ເມືອງວັງວຽງ, ແຂວງ ວຽງຈັນ, ສປປ ລາວ.

ສະພາບໍລິຫານ

ສະມາຊິກສະພາບໍລິຫານ ພາຍໃນປີທີ່ສິ້ນສຸດ ວັນທີ 31 ທັນວາ 2025 ແລະ ນະວັນທີຂອງບົດລາຍງານສະບັບນີ້ລວມມີ:

ຊື່	*ຕຳແໜ່ງ*	*ວັນທີແຕ່ງຕັ້ງ/ລາອອກ*
ທ່ານ ເນັຍ ເຫຼຍ	ປະທານ	ແຕ່ງຕັ້ງວັນທີ 09 ມີນາ 2023
ທ່ານ ວັນທອງ ສິດທິກຸນ	ຮອງປະທານ	ແຕ່ງຕັ້ງວັນທີ 23 ມີຖຸນາ 2020
ທ່ານ ທ່ານ ຫລໍ ຮ້າວ	ສະມາຊິກ	ແຕ່ງຕັ້ງວັນທີ 09 ມີນາ 2023
ທ່ານ ຄຳບິນ ໄຊເລົ່າວົງ	ສະມາຊິກ	ແຕ່ງຕັ້ງວັນທີ 23 ມີຖຸນາ 2020
ທ່ານ ຈ່າງ ຈິ່ງຫົວ	ສະມາຊິກ	ແຕ່ງຕັ້ງວັນທີ 09 ມີນາ 2023
ທ່ານ ສິນທະນຸ ສົມຟອງບຸດຕະຂັນ	ສະມາຊິກ	ແຕ່ງຕັ້ງວັນທີ 28 ສິງຫາ 2024
ທ່ານ ນາງ ຊ້າຍ ຫລີງຫລິງ	ສະມາຊິກ	ແຕ່ງຕັ້ງວັນທີ 09 ມີນາ 2023
ທ່ານ ຕິ່ງ ເຈີ້ນຊູ	ສະມາຊິກ	ແຕ່ງຕັ້ງວັນທີ 23 ທັນວາ 2025
ທ່ານ ຕົ້ງ ຢູ່ຕົ້ງ	ສະມາຊິກ	ລາອອກວັນທີ 23 ທັນວາ 2025
ທ່ານ ຫຼົ່ວ ເຫວີນຈຸ້	ສະມາຊິກອິດສະຫຼະ	ແຕ່ງຕັ້ງວັນທີ 23 ທັນວາ 2025
ທ່ານ ໄຕ ຫຼົ່ງຫົວ	ສະມາຊິກອິດສະຫຼະ	ແຕ່ງຕັ້ງວັນທີ 09 ມີນາ 2023
ທ່ານ ວິຄຳແດງ ອິນທະໄຊ	ສະມາຊິກອິດສະຫຼະ	ແຕ່ງຕັ້ງວັນທີ 28 ສິງຫາ 2024

ຄະນະອຳນວຍການ

ສະມາຊິກຄະນະອຳນວຍການຂອງບໍລິສັດ ພາຍໃນປີທີ່ສິ້ນສຸດ ວັນທີ 31 ທັນວາ 2025 ແລະ ນະວັນທີຂອງບົດລາຍງານສະບັບນີ້ລວມມີ:

ຊື່	*ຕຳແໜ່ງ*	*ວັນທີແຕ່ງຕັ້ງ/ລາອອກ*
ທ່ານ ເນັຍ ເຫຼຍ	ຜູ້ອຳນວຍການໃຫຍ່	ແຕ່ງຕັ້ງວັນທີ 09 ມີນາ 2023
ທ່ານ ທ່ານ ຫລໍ ຮ້າວ	ຜູ້ອຳນວຍການ	ແຕ່ງຕັ້ງວັນທີ 09 ມີນາ 2023
ທ່ານ ຕົ້ງ ຢູ່ຕົ້ງ	ຜູ້ອຳນວຍການ	ລາອອກວັນທີ 23 ທັນວາ 2025
ທ່ານ ຈ່າງ ຈິ່ງຫົວ	ຫົວໜ້າຝ່າຍການເງິນ	ແຕ່ງຕັ້ງວັນທີ 09 ມີນາ 2023
ທ່ານ ຄຳບິນ ໄຊເລົ່າວົງ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 23 ມີຖຸນາ 2020
ທ່ານ ສິນທະນຸ ສົມຟອງບຸດຕະຂັນ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 28 ສິງຫາ 2024
ທ່ານ ນາງ ສີ ຢຸຫົງ	ເລຂາສະພາບໍລິຫານ	ແຕ່ງຕັ້ງວັນທີ 28 ສິງຫາ 2024

ຄະນະກຳມະການກວດສອບ

ສະມາຊິກຄະນະກຳມະການກວດສອບຂອງບໍລິສັດ ພາຍໃນປີທີ່ສິ້ນສຸດ ວັນທີ 31 ທັນວາ 2025 ແລະ ນະວັນທີຂອງບົດລາຍງານສະບັບນີ້ລວມມີ:

ຊື່	*ຕຳແໜ່ງ*	*ວັນທີແຕ່ງຕັ້ງ/ລາອອກ*
ທ່ານ ໄຕ ຫຼົ່ງຫົວ	ປະທານ	ແຕ່ງຕັ້ງວັນທີ 09 ມີນາ 2023
ທ່ານ ຫລໍ ຮ້າວ	ສະມາຊິກ	ລາອອກວັນທີ 23 ທັນວາ 2025
ທ່ານ ຫຼົ່ວ ເຫວີນຈຸ້	ສະມາຊິກ	ແຕ່ງຕັ້ງວັນທີ 23 ທັນວາ 2025
ທ່ານ ວິຄຳແດງ ອິນທະໄຊ	ສະມາຊິກ	ແຕ່ງຕັ້ງວັນທີ 28 ສິງຫາ 2024

ຂໍ້ມູນທົ່ວໄປ (ຕໍ່)

ຜູ້ຕາງໜ້າທາງດ້ານກົດໝາຍ

ຜູ້ຕາງໜ້າທາງດ້ານກົດໝາຍຂອງບໍລິສັດພາຍໃນປີທີ່ສິ້ນສຸດ ແລະ ນະວັນທີມື້ອອກບົດລາຍງານສະບັບນີ້ແມ່ນ ທ່ານ ເນ້ຍ ເຫຼຍ ຜູ້ອຳນວຍການໃຫຍ່ ແລະ ປະທານສະພາບໍລິຫານ.

ນັກກວດສອບບັນຊີ

ນັກກວດສອບບັນຊີຂອງບໍລິສັດແມ່ນ ບໍລິສັດ ເອີນແອນຢັ້ງ ລາວ ຈຳກັດ.

ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ

ບົດລາຍງານຂອງຄະນະອຳນວຍການ

ຄະນະອຳນວຍການຂອງ ກຸ່ມບໍລິສັດ ທ່ອງທ່ຽວວັດທະນະທຳລາວ ມະຫາຊົນ ("ບໍລິສັດ") ມີຄວາມຍິນດີນຳສະເໜີບົດລາຍງານຂອງຕົນ ເອງ ແລະ ເອກະສານລາຍງານການເງິນແບບແຍກກິດຈະການສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2025.

ຄວາມຮັບຜິດຊອບຂອງຄະນະອຳນວຍການຕໍ່ເອກະສານລາຍງານການເງິນແບບແຍກກິດຈະການ

ຄະນະອຳນວຍການມີຄວາມຮັບຜິດຊອບໃນການກະກຽມເອກະສານລາຍງານການເງິນແບບແຍກກິດຈະການ ເຊິ່ງຖືກກະກຽມອີງຕາມ ນະໂຍບາຍການບັນຊີດັ່ງທີ່ໄດ້ລະບຸໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນແບບແຍກກິດຈະການ. ນະໂຍບາຍການ ບັນຊີເຫຼົ່ານີ້ແມ່ນບໍ່ໄດ້ມີຈຸດປະສົງນຳສະເໜີຖານະການເງິນແບບແຍກກິດຈະການ, ຜົນຂອງການດຳເນີນງານແບບແຍກກິດຈະການ ແລະ ກະແສເງິນສົດແບບແຍກກິດຈະການຂອງບໍລິສັດ ໂດຍສອດຄ່ອງຕາມຫຼັກການບັນຊີສາກົນທີ່ຖືກຍອມຮັບໂດຍທົ່ວໄປ. ໃນການ ກະກຽມເອກະສານລາຍງານການເງິນແບບແຍກກິດຈະການ, ຄະນະອຳນວຍການຕ້ອງປະຕິບັດດັ່ງນີ້:

- ເລືອກເຟັ້ນເອົານະໂຍບາຍການບັນຊີທີ່ເໝາະສົມ ແລະ ຈັດຕັ້ງປະຕິບັດຢ່າງສະໝ່ຳສະເໝີ;
- ພິຈາລະນາ ແລະ ຄາດຄະເນຢ່າງສົມເຫດສົມຜົນ ແລະ ລະອຽດຮອບຄອບ;
- ຖະແຫຼງການວ່າ ບັນດາມາດຕະຖານການບັນຊີທີ່ກ່ຽວຂ້ອງໄດ້ຖືກປະຕິບັດຕາມມາດຕະຖານ, ສິ່ງທີ່ໄດ້ປະຕິບັດແຕກຕ່າງຈາກ ມາດຕະຖານຈະຕ້ອງຖືກເປີດເຜີຍ ແລະ ອະທິບາຍຢູ່ໃນເອກະສານລາຍງານການເງິນແບບແຍກກິດຈະການ; ແລະ
- ກະກຽມເອກະສານລາຍງານການເງິນແບບແຍກກິດຈະການບົນພື້ນຖານຄວາມສືບເນື່ອງໃນການດຳເນີນທຸລະກິດ, ຍົກເວັ້ນໃນ ກໍລະນີທີ່ບໍລິສັດຫາກຕັ້ງຂໍ້ສົມມຸດຖານ ຫຼື ຄາດຄະເນວ່າບໍລິສັດ ຈະບໍ່ສາມາດດຳເນີນທຸລະກິດຕໍ່ໄປໄດ້.

ຄະນະອຳນວຍການມີໜ້າທີ່ຮັບປະກັນວ່າ ບັນດາຂໍ້ມູນການບັນທຶກທາງບັນຊີໄດ້ຖືກເປີດເຜີຍຖານະທາງການເງິນຂອງບໍລິສັດຢ່າງສົມ ເຫດສົມຜົນຕະຫຼອດເວລາ, ກ່ຽວກັບຖານະທາງການເງິນແບບແຍກກິດຈະການຂອງບໍລິສັດ ແລະ ຮັບປະກັນວ່າເອກະສານລາຍງານ ການເງິນແບບແຍກກິດຈະການແມ່ນສອດຄ່ອງກັບລະບຽບການບັນຊີທີ່ໄດ້ນຳໃຊ້. ຄະນະອຳນວຍການຂອງບໍລິສັດຍັງຮັບຜິດຊອບຕໍ່ການ ຮັກສາຊັບສົມບັດຂອງບໍລິສັດ ແລະ ຮັບປະກັນວ່າບໍລິສັດມີ ຂັ້ນຕອນທີ່ສົມເຫດສົມຜົນໃນການປ້ອງກັນ ແລະ ຄົ້ນຫາການສໍ້ໂກງ ແລະ ສິ່ງທີ່ຜິດປົກກະຕິອື່ນໆ.

ຄະນະອຳນວຍການຢັ້ງຢືນວ່າ ໄດ້ປະຕິບັດຕາມທຸກຂໍ້ກຳນົດຂ້າງເທິງໃນການກະກຽມເອກະສານລາຍງານການເງິນແບບແຍກກິດຈະການ ສະບັບນີ້.

ຖະແຫຼງການຂອງຄະນະອຳນວຍການ

ຄະນະອຳນວຍການ ມີຄວາມຍິນດີຖະແຫຼງວ່າ ເອກະສານລາຍງານການເງິນແບບແຍກກິດຈະການແມ່ນໄດ້ກະກຽມຖືກຕ້ອງຕາມຄວາມ ເປັນຈິງ ສອດຄ່ອງກັບນະໂຍບາຍບັນຊີທີ່ລະບຸໄວ້ໃນບົດອະທິບາຍ ເລກທີ 3 ຂອງເອກະສານລາຍງານການເງິນແບບແຍກກິດຈະການ.

ໃນນາມຂອງຄະນະອຳນວຍການ:

ທ່ານ ໝ້ຍ ເຫຼ້ຍ
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

30 ມີນາ 2026

Ernst & Young Lao Co., Ltd
6th floor, Kolao Tower I, 23 Singha Road
Nongbone Village, Saysettha District
Vientiane Capital, Lao P.D.R.

Tel: +856 21 455 077
Fax: +856 21 455 078
ey.com

Building a better working world

ເລກທີອ້າງອີງ: 11728747/E-69207199-ແບບແຍກກິດຈະການ

ບົດລາຍງານຂອງນັກກວດສອບອິດສະຫຼະ

ຮຽນ : ຜູ້ຖືຮຸ້ນຂອງ ກຸ່ມບໍລິສັດ ທ່ອງທ່ຽວອັດທະນະທຳລາວ ມະຫາຊົນ ທີ່ນັບຖື

ຄຳເຫັນແບບບໍ່ອອກຄຳເຫັນ

ພວກຂ້າພະເຈົ້າໄດ້ດຳເນີນການກວດສອບເອກະສານລາຍງານການເງິນແບບແຍກກິດຈະການ ຂອງ ກຸ່ມບໍລິສັດ ທ່ອງທ່ຽວອັດທະນະທຳ ລາວ ມະຫາຊົນ ("ບໍລິສັດ"), ເຊິ່ງລວມມີ ໃບລາຍງານຖານະການເງິນແຍກກິດຈະການ ນະວັນທີ 31 ທັນວາ 2025, ແລະ ໃບລາຍງານ ຜົນການດຳເນີນງານແບບແຍກກິດຈະການ, ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງແບບແຍກກິດຈະການ ແລະ ໃບລາຍງານກະແສ ເງິນສົດແບບແຍກກິດຈະການ ສຳລັບປີທີ່ສິ້ນສຸດວັນທີດັ່ງກ່າວ ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນແບບແຍກ ກິດຈະການ, ລວມທັງບົດສະຫຼຸບຂອງນັບດານະໂຍບາຍການບັນຊີທີ່ສຳຄັນ.

ເນື່ອງຈາກຄວາມສຳຄັນຂອງບັນຫາຕ່າງໆທີ່ໄດ້ອະທິບາຍໄວ້ໃນ *ວັກພື້ນຖານໃນການບໍ່ສະແດງຄຳເຫັນ*, ພວກຂ້າພະເຈົ້າບໍ່ສາມາດເກັບກຳ ຫຼັກຖານການກວດສອບທີ່ເໝາະສົມພຽງພໍເພື່ອເປັນພື້ນຖານໃຫ້ແກ່ການອອກຄຳເຫັນສຳລັບການກວດສອບ. ດັ່ງນັ້ນ, ພວກຂ້າພະເຈົ້າບໍ່ ໄດ້ສະແດງຄຳເຫັນຕໍ່ກັບເອກະສານລາຍງານການເງິນແບບແຍກກິດຈະການດັ່ງກ່າວ.

ພື້ນຖານສະຫຼຸບໃນການອອກຄຳເຫັນແບບບໍ່ສະແດງຄຳເຫັນ

ດັ່ງທີ່ໄດ້ເປີດເຜີຍໃນບົດອະທິບາຍເລກທີ 2 ຂອງເອກະສານລາຍງານການເງິນແບບແຍກກິດຈະການ, ບໍລິສັດເກີດການຂາດທຶນສຸດທິ ຈຳນວນ 23.27 ຕື້ກີບ ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2025. ນະວັນທີດັ່ງກ່າວ, ບໍລິສັດ ມີຍອດຂາດທຶນສະສົມຈຳນວນ 103.12 ຕື້ກີບ ແລະ ມີໜີ້ສິນໝຸນວຽນຈຳນວນ 153.56 ຕື້ກີບ ເຊິ່ງເກີນມູນຄ່າຂອງຊັບສິນໝຸນວຽນຈຳນວນ 66.70 ຕື້ກີບ. ເງື່ອນໄຂເຫຼົ່ານີ້ບົ່ງຊີ້ ໃຫ້ເຫັນເຖິງ ຄວາມບໍ່ແນ່ນອນທີ່ມີສາລະອັນສຳຄັນ ທີ່ເຮັດໃຫ້ເກີດຄວາມສົງໄສອັນໃຫຍ່ຫຼວງຕໍ່ຄວາມສາມາດຂອງບໍລິສັດໃນການສືບຕໍ່ ການດຳເນີນທຸລະກິດຢ່າງສືບເນື່ອງ. ເອກະສານລາຍງານການເງິນແບບແຍກກິດຈະການ ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2024 ແມ່ນໄດ້ຖືກກະກຽມບົນພື້ນຖານຫຼັກການແຫ່ງຄວາມສືບເນື່ອງ ໂດຍອີງຕາມຂໍ້ສົມມຸດຖານທີ່ວ່າບໍລິສັດມີຊັບພະຍາກອນພຽງພໍ ໃນ ການຊຳລະໜີ້ສິນຂອງຕົນໃຫ້ກັບພາກສ່ວນທີສາມ ແລະ ພຽງພໍສຳລັບສືບຕໍ່ດຳເນີນງານໃນປີຕໍ່ໄປ ໂດຍປາສະຈາກຂໍ້ຈຳກັດຕ່າງໆ. ຄະນະອຳນວຍການຂອງບໍລິສັດໄດ້ກະກຽມການຄາດການກະແສເງິນສົດເພື່ອຮອງຮັບການຊຳລະໜີ້ ແລະ ແຜນການດຳເນີນທຸລະກິດ, ໂດຍພິຈາລະນາຈາກຄວາມຄາດຫວັງທີ່ບໍ່ສາມາດໄດ້ຮັບການສະໜັບສະໜຸນຢ່າງເປັນທາງການຈາກຜູ້ຖືຮຸ້ນຂອງຕົນ ແລະ ພາກສ່ວນທີ່ ກ່ຽວຂ້ອງ ແລະ ມີຄວາມສາມາດໃນການຂາຍຊັບສິນທີ່ມີຢູ່ໃນປັດຈຸບັນ ອີງຕາມຂໍ້ມູນທີ່ມີຢູ່ໃນປະຈຸບັນ, ພວກຂ້າພະເຈົ້າ ບໍ່ໄດ້ຮັບຫຼັກ ຖານທີ່ເໝາະສົມພຽງພໍເພື່ອຢັ້ງຢືນຂໍ້ສົມມຸດຖານຂອງຄະນະອຳນວຍການຂອງບໍລິສັດ ໃນການກະກຽມການຄາດການກະແສເງິນສົດ ຂ້າງເທິງ. ດັ່ງນັ້ນ, ພວກຂ້າພະເຈົ້າ ຈຶ່ງບໍ່ສາມາດພິຈາລະນາຄວາມເໝາະສົມຂອງການນຳໃຊ້ຂໍ້ສົມມຸດຖານຫຼັກການແຫ່ງຄວາມສືບເນື່ອງ ໃນການກະກຽມເອກະສານລາຍງານການເງິນແບບແຍກກິດຈະການເຫຼົ່ານີ້ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2025.

ບັນຫາທີ່ຄວນເອົາໃຈໃສ່ - ນະໂຍບາຍບັນຊີ

ພວກຂ້າພະເຈົ້າ ສະເໜີໃຫ້ເອົາໃຈໃສ່ຕໍ່ບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນແບບແຍກກິດຈະການ, ເຊິ່ງໄດ້ລະບຸ ກ່ຽວກັບ ນະໂຍບາຍການບັນຊີທີ່ຖືກນຳໃຊ້ໂດຍບໍລິສັດ. ນະໂຍບາຍບັນຊີເຫຼົ່ານີ້ ບໍ່ໄດ້ມີຈຸດປະສົງເພື່ອສະແດງຖານະການເງິນແບບແຍກ ກິດຈະການຜົນການດຳເນີນງານແບບແຍກກິດຈະການ ແລະ ກະແສເງິນສົດແບບແຍກກິດຈະການຂອງບໍລິສັດ ໂດຍສອດຄ່ອງກັບ ຫຼັກການບັນຊີສາກົນ ທີ່ຖືກຍອມຮັບໂດຍທົ່ວໄປ.

ການສະຫຼຸບຂອງພວກຂ້າພະເຈົ້າບໍ່ໄດ້ສະແດງຄຳເຫັນແບບມີເງື່ອນໄຂຕໍ່ກັບບັນຫາດັ່ງກ່າວ.

A member firm of Ernst & Young Global Limited

Building a better working world

ຄວາມຮັບຜິດຊອບຂອງຄະນະອຳນວຍການ ແລະ ຜູ້ມີອຳນາດໃນການຄວບຄຸມ ຕໍ່ເອກະສານລາຍງານການເງິນແບບແຍກກິດຈະການ

ຄະນະອຳນວຍການຂອງບໍລິສັດ ແມ່ນມີຄວາມຮັບຜິດຊອບໃນການກະກຽມເອກະສານລາຍງານການເງິນແບບແຍກກິດຈະການ ຕາມ ນະໂຍບາຍບັນຊີທີ່ໄດ້ລະບຸໃນບົດອະທິບາຍເລກທີ 3 ຂອງເອກະສານລາຍງານການເງິນແບບແຍກກິດຈະການ, ແລະ ບັນດາການຄວບ ຄຸມພາຍໃນຕາມທີ່ຄະນະອຳນວຍການເຫັນວ່າ ຈຳເປັນໃນການກະກຽມເອກະສານລາຍງານການເງິນແບບແຍກກິດຈະການ ໃຫ້ມີຄວາມ ຖືກຕ້ອງ ແລະ ປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ, ທີ່ອາດຈະເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດຕ່າງໆ.

ໃນການກະກຽມເອກະສານລາຍງານການເງິນແບບແຍກກິດຈະການ, ຄະນະອຳນວຍການແມ່ນຮັບຜິດຊອບໃນການປະເມີນ ຄວາມ ສາມາດ ຂອງບໍລິສັດດ້ານຄວາມສືບເນື່ອງໃນການດຳເນີນທຸລະກິດ, ເປີດເຜີຍບັນຫາຕ່າງໆທີ່ກ່ຽວກັບຄວາມສືບເນື່ອງຂອງການດຳເນີນ ທຸລະກິດ, ຫາກມີ ແລະ ນຳໃຊ້ພື້ນຖານການບັນຊີອ່ຳດ້ວຍຫຼັກການແຫ່ງຄວາມສືບເນື່ອງໃນການດຳເນີນທຸລະກິດ, ເວັ້ນເສຍແຕ່ ທາງ ຄະນະອຳນວຍ ການ ມີຈຸດປະສົງຍຸບເລີກບໍລິສັດ, ຫຼື ຍຸບເລີກກິດຈະການ ຫຼື ບໍ່ມີທາງເລືອກທີ່ດຳເນີນຕໍ່ໄປໄດ້ ແຕ່ຕ້ອງໄດ້ປະຕິບັດ ດັ່ງກ່າວ.

ຜູ້ມີອຳນາດໃນການຄວບຄຸມ ແມ່ນມີຄວາມຮັບຜິດຊອບໃນການກວດກາຂະບວນການລາຍງານການເງິນຂອງບໍລິສັດ.

ຄວາມຮັບຜິດຊອບຂອງນັກກວດສອບໃນການກວດສອບເອກະສານລາຍງານການເງິນແຍກກິດຈະການ

ຄວາມຮັບຜິດຊອບຂອງພວກຂ້າພະເຈົ້າແມ່ນເພື່ອດຳເນີນການກວດສອບເອກະສານລາຍງານການເງິນແບບແຍກກິດຈະການຂອງບໍລິສັດ ໂດຍສອດຄ່ອງກັບມາດຕະຖານສາກົນດ້ານການກວດສອບ (*ISA*) ແລະ ການອອກບົດລາຍງານຂອງນັກກວດສອບບັນຊີ. ເຖິງຢ່າງໃດ ກໍ່ຕາມ, ເນື່ອງຈາກຄວາມສຳຄັນຂອງບັນຫາທີ່ໄດ້ອະທິບາຍໃນ*ພື້ນຖານໃນການບໍ່ສະແດງຄຳເຫັນ* ໃນບົດລາຍງານຂອງພວກຂ້າພະເຈົ້າ, ພວກຂ້າພະເຈົ້າບໍ່ສາມາດເກັບກຳຫຼັກຖານການກວດສອບທີ່ເໝາະສົມເພື່ອເປັນພື້ນຖານພຽງພໍໃຫ້ແກ່ການອອກຄຳເຫັນຂອງເອກະສານ ລາຍງານການເງິນແບບແຍກກິດຈະການສະບັບນີ້.

ພວກຂ້າພະເຈົ້າ ແມ່ນມີຄວາມເປັນເອກະລາດຈາກບໍລິສັດ ໂດຍສອດຄ່ອງກັບກົດຈັນຍາບັນຂອງນັກວິຊາຊີບບັນຊີ ທີ່ອອກໂດຍ ສະພາ ຄຸ້ມຄອງມາດຕະຖານຈັນຍາບັນຂອງນັກບັນຊີສາກົນ (ລວມທັງມາດຕະຖານສາກົນດ້ານການເປັນເອກະລາດ) (IESBA Code) ແລະ ບັນດາເງື່ອນໄຂທາງດ້ານຈັນຍາບັນອື່ນໆທີ່ກ່ຽວຂ້ອງ ເຂົ້າໃນການກວດສອບເອກະສານລາຍງານການເງິນໃນ ສປປ ລາວ, ແລະ ພວກ ຂ້າພະເຈົ້າຍັງໄດ້ປະຕິບັດ ຄວາມຮັບຜິດຊອບທາງດ້ານຈັນຍາບັນອື່ນໆ ທີ່ກ່ຽວຂ້ອງກັບເງື່ອນໄຂດັ່ງກ່າວ ແລະ ກົດລະບຽບຂອງ ສະພາ ວິຊາຊີບ.

ຕາງໜ້າ ແລະ ໃນນາມບໍລິສັດ ເອີນແອນຢັ້ງ ລາວ ຈຳກັດ

ກະຊວງ ການ ເງິນ ບໍລິສັດ ເອີນແອນຢັ້ງລາວ ຈຳກັດ Ernst & Young Lao Co.,Ltd ນະຄອນ ຫຼວງ ວຽງຈັນ

ທ່ານ ອັນ ເລ
ຮຸ້ນສ່ວນ

ໃບອະນຸຍາດດຳເນີນການກວດສອບ
ເລກທີ 018/LCPAA APT-29

ນະຄອນຫຼວງວຽງຈັນ, ສປປ ລາວ

30 ມີນາ 2026

A member firm of Ernst & Young Global Limited

ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ

ໃບລາຍງານຖານະທາງການເງິນແບບແຍກກິດຈະການ
ນະວັນທີ 31 ທັນວາ 2025

	ບົດອະທິບາຍ ເລກທີ	*31 ທັນວາ 2025 ກີບ*	*31 ທັນວາ 2024 ກີບ*
ຊັບສິນ			
ຊັບສິນບໍ່ໝຸນວຽນ			
ຊັບສິນ, ອາຄານ ແລະ ອຸປະກອນ	4	497,038,822	762,996,896
ຊັບສິນພວມກໍ່ສ້າງ	6	18,132,257,751	30,673,610,031
ຊັບສິນບັດຄົງທີ່ບໍ່ມີຕົວຕົນ	5	3,736,012,504	3,681,415,835
ການລົງທຶນໃນບໍລິສັດໃນເຄືອ	7	5,849,064,057	5,203,557,146
ລວມຊັບສິນບໍ່ໝຸນວຽນ		**28,214,373,134**	**40,321,579,908**
ຊັບສິນໝຸນວຽນ			
ຊັບສິນໝຸນວຽນອື່ນໆ	8	6,561,575,490	4,322,776,548
ເຄື່ອງໃນສາງ	9	74,687,556,805	12,324,012,453
ໜີ້ຕ້ອງຮັບຈາກພາກສ່ວນທີ່ກ່ຽວຂ້ອງ	22	4,862,634,419	2,847,957,610
ໜີ້ຕ້ອງຮັບທາງການຄ້າ	10	36,021,574	1,656,111,790
ເງິນສົດ	11	716,918,461	574,997,658
ລວມຊັບສິນໝຸນວຽນ		**86,864,706,749**	**21,725,856,059**
ລວມຊັບສິນທັງໝົດ		**115,079,079,883**	**62,047,435,967**

ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ

ໃບລາຍງານຖານະທາງການເງິນແບບແຍກກິດຈະການ (ຕໍ່)
ນະວັນທີ 31 ທັນວາ 2025

	ບົດອະທິບາຍ ເລກທີ	31 ທັນວາ 2025 ກີບ	31 ທັນວາ 2024 ກີບ
ໜີ້ສິນ ແລະ ທຶນ			
ໜີ້ສິນໝຸນວຽນ			
ໜີ້ຕ້ອງສົ່ງການຄ້າ	12	6,485,981,670	8,025,747,856
ເງິນລ່ວງໜ້າຈາກລູກຄ້າ	13	24,046,259,134	12,440,807,689
ໜີ້ຕ້ອງສົ່ງໃຫ້ພາກສ່ວນທີ່ກ່ຽວຂ້ອງ	23	16,056,542,166	12,887,018,084
ພັນທະອາກອນ	14	9,168,578,357	8,152,671,650
ໜີ້ຕ້ອງສົ່ງໃຫ້ພະນັກງານ		13,913,060,489	11,074,331,574
ໜີ້ຕ້ອງສົ່ງອື່ນໆ	15	83,895,572,835	24,682,695,701
ລວມໜີ້ສິນໝຸນວຽນ		**153,565,994,651**	**77,263,272,554**
ລວມໜີ້ສິນທັງໝົດ		**153,565,994,651**	**77,263,272,554**
ທຶນ			
ທຶນຈົດທະບຽນທີ່ໄດ້ຖອກແລ້ວ	16	20,002,000,000	20,002,000,000
ສ່ວນເພີ່ມມູນຄ່າຮຸ້ນ		18,385,975,511	18,385,975,511
ຄັງສຳຮອງຕາມລະບຽບການ		7,704,052,546	7,704,052,546
ຄັງສຳຮອງເພື່ອຂະຫຍາຍອາຄານ		18,549,465,596	18,549,465,596
ຂາດທຶນສະສົມ		(103,128,408,421)	(79,857,330,240)
ລວມທຶນ		**(38,486,914,768)**	**(15,215,836,587)**
ລວມໜີ້ສິນ ແລະ ທຶນທັງໝົດ		**115,079,079,883**	**62,047,435,966**

ກະຊວງ ວັດທະນະທຳ ແລະ ການທ່ອງ ກຸ່ມບໍລິສັດ ທ່ອງທ່ຽວວັດທະນະທຳ ລາວ ມະຫາຊົນ Lao Culture Tourism Public Group Company ນະຄອນ ຫຼວງ

ທ່ານ ເນ້ຍ ເຫຼັຍ
ຜູ້ອຳນວຍການໃຫຍ່

ທ່ານ ຈ່ຳ ຈົ່ງຫົວ
ຫົວໜ້າບັນຊີ ແລະ ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

30 ມີນາ 2026

ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ

ໃບລາຍງານຜົນການດຳເນີນງານແບບແຍກປະເພດຈະການ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2025

	ບົດອະທິບາຍ ເລກທີ	2025 ກີບ	2024 ກີບ
ລາຍຮັບຈາກການຂາຍສິນຄ້າ		-	-
ຕົ້ນທຶນຈາກການຂາຍ		-	-
ກຳໄລຂັ້ນຕົ້ນ		-	-
ລາຍໄດ້ຈາກການດຳເນີນງານອື່ນໆ	17	522,613,836	17,681,203,801
ລາຍຈ່າຍຈາກການດຳເນີນງານອື່ນໆ	18	(6,372,467,388)	(3,681,724,728)
ລາຍຈ່າຍໃນການບໍລິຫານ	19	(14,824,014,331)	(19,168,707,315)
ຂາດທຶນຈາກການດຳເນີນງານ		**(20,673,867,883)**	**(5,169,228,242)**
ລາຍຮັບທາງການເງິນ		108,198	375,073,915
ຕົ້ນທຶນທາງການເງິນ	20	(2,597,318,496)	-
ຂາດທຶນກ່ອນອາກອນ		**(23,271,078,181)**	**(4,794,154,327)**
ລາຍຈ່າຍອາກອນກຳໄລ	21	-	-
ຂາດທຶນສຸດທິຫຼັງອາກອນ		**(23,271,078,181)**	**(4,794,154,327)**

ທ່ານ ເນັຍເໜັຍ
ຜູ້ອຳນວຍການໃຫຍ່

ທ່ານ ຈ່ຽ ຈົ່ງຫົວ
ຫົວໜ້າບັນຊີ ແລະ ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

30 ມີນາ 2026

ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງແບບແຍກກິດຈະການ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2025

	ທຶນຈົດທະບຽນທີ່ ໄດ້ຖອກແລ້ວ ກີບ	*ສ່ວນເພີ່ມມູນຄ່າຮຸ້ນ ກີບ*	*ຄັງສຳຮອງຕາມ ລະບຽບການ ກີບ*	*ຄັງສຳຮອງເພື່ອ ຂະຫຍາຍອາຄານ ກີບ*	*ຂາດທຶນສະສົມ ກີບ*	*ລວມທັງໝົດ ກີບ*
ນະວັນທີ 1 ມັງກອນ 2024	20,002,000,000	18,385,975,511	7,704,052,546	18,549,465,596	(75,063,175,913)	(10,421,682,260)
ຂາດທຶນສຸດທິພາຍໃນປີ	-	-	-	-	(4,794,154,327)	(4,794,154,327)
ນະວັນທີ 31 ທັນວາ 2024	**20,002,000,000**	**18,385,975,511**	**7,704,052,546**	**18,549,465,596**	**(79,857,330,240)**	**(15,215,836,587)**
ນະວັນທີ 1 ມັງກອນ 2025	20,002,000,000	18,385,975,511	7,704,052,546	18,549,465,596	(79,857,330,240)	(15,215,836,587)
ຂາດທຶນສຸດທິພາຍໃນປີ	-	-	-	-	(23,271,078,181)	(23,271,078,181)
ນະວັນທີ 31 ທັນວາ 2025	**20,002,000,000**	**18,385,975,511**	**7,704,052,546**	**18,549,465,596**	**(103,128,408,421)**	**(38,486,914,768)**

ທ່ານ ເນັຍ ເຫຼັຍ
ຜູ້ອຳນວຍການໃຫຍ່

ທ່ານ ຈ່າງ ຈິ່ງຫົວ
ຫົວໜ້າບັນຊີ ແລະ ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

30 ມີນາ 2026

ໃບລາຍງານກະແສເງິນສົດແບບແຍກກິດຈະການ
ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2025

	ບົດອະທິບາຍ ເລກທີ	*2025 ກີບ*	*2024 ກີບ*
ກິດຈະກຳການດຳເນີນງານ			
ຂາດທຶນກ່ອນອາກອນ		**(23,271,078,181)**	**(4,794,154,327)**
ດັດແກ້ສຳລັບ:			
ຄ່າຫຼ້ຍຫ້ຽນຂອງຊັບສິນ, ອາຄານ ແລະ ອຸປະກອນ	4,5	381,163,375	404,116,126
ຫັກເງິນແຮ/(ການເກັບຄືນເງິນແຮ)ສຳລັບເຄື່ອງໃນ ສາງ		2,835,653,508	(8,723,578)
ການເກັບຄືນເງິນແຮສຳລັບໜີ້ທວງຍາກ		(37,936,200)	(49,416,000)
ຂາດທຶນສຸດທິຈາກອັດຕາແລກປ່ຽນ		1,173,876,086	(104,188,276)
ກຳໄລຈາກການຂາຍຊັບສິນ ແລະ ວັດຖຸດິບ		(478,350,000)	(5,254,392,318)
ລາຍຈ່າຍດອກເບ້ຍ		1,258,272,210	-
ການດັດແກ້ທຶນໝຸນວຽນ:			
ເພີ່ມຂຶ້ນຂອງໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບ ອື່ນໆ, ລວມທັງຈຳນວນໜີ້ຄ້າງຊຳລະຈາກພາກສ່ວນ ທີ່ກ່ຽວຂ້ອງ		(540,006,399)	(1,750,520,938)
ເພີ່ມຂຶ້ນຂອງຊັບສິນໝຸນວຽນອື່ນໆ		(2,012,019,637)	(2,833,456,321)
ເພີ່ມຂຶ້ນຂອງເຄື່ອງໃນສາງ		(48,547,761,410)	(5,434,453,160)
ເພີ່ມຂຶ້ນຂອງໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງ ສົ່ງອື່ນໆ, ລວມທັງຈຳນວນໜີ້ຄ້າງຊຳລະໃຫ້ ພາກສ່ວນທີ່ກ່ຽວຂ້ອງ		62,624,889,713	5,466,788,186
ລາຍຮັບດອກເບ້ຍ		108,198	68,262
ກະແສເງິນສົດສຸດທິທີ່ນຳໃຊ້ໃນກິດຈະກຳການດຳ ເນີນງານ		**(6,613,188,737)**	**(14,358,332,344)**
ກິດຈະກຳການລົງທຶນ			
ການຈັດຊື້ຊັບສິນ, ອາຄານ ແລະ ອຸປະກອນ		(107,577,381)	(589,856,436)
ລາຍຮັບຈາກການຂາຍຊັບສິນບັດຄົງທີ່		478,350,000	5,254,392,318
ການຈັດຊື້ຊັບສິນທີ່ບໍ່ມີຕົວຕົນ		(62,224,589)	-
ການລົງທຶນກັບບໍລິສັດໃນເຄືອ		(645,506,911)	(4,014,322,072)
ຊັບສິນພວມກໍ່ສ້າງ		(4,110,084,170)	(760,529,984)
ກະແສເງິນສົດສຸດທິນຳໃຊ້ກິດຈະກຳການລົງທຶນ		**(4,447,043,051)**	**(110,316,174)**

	ບົດອະທິບາຍ ເລກທີ	2025 ກີບ	2024 ກີບ
ກິດຈະກຳການເງິນ			
ເພີ່ມເງິນກູ້ຢືມ		11,351,389,212	14,000,410,000
ຈ່າຍເງິນກູ້ຢືມ		(198,235,755)	(561,389,949)
ກະແສເງິນສົດສຸດທິຈາກກິດຈະກຳການ ເງິນ		**11,153,153,457**	**13,439,020,051**
ເງິນສົດເພີ່ມຂຶ້ນ/(ຫຼຸດລົງ)ສຸດທິ		92,921,669	(1,029,628,467)
ເງິນສົດຕົ້ນໄລຍະ		574,997,659	1,606,207,716
ຜົນກະທົບຈາກຄວາມຜັນຜວນຂອງອັດຕາ ແລກປ່ຽນ		48,999,133	(1,581,591)
ເງິນສົດທ້າຍໄລຍະ	**11**	**716,918,461**	**574,997,658**

ທ່ານ ເນ້ຍ ເຫຼ້ຍ
ຜູ້ອຳນວຍການໃຫຍ່

ທ່ານ ຈ່າງ ຈິ່ງຫົວ
ຫົວໜ້າບັນຊີ ແລະ ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

30 ມີນາ 2026

1. ຂໍ້ມູນບໍລິສັດ

ກຸ່ມບໍລິສັດ ທ່ອງທ່ຽວ ອັດທະນະທຳລາວ ມະຫາຊົນ ("ບໍລິສັດ") ເຊິ່ງກ່ອນໜ້ານີ້ແມ່ນ ບໍລິສັດ ຊີມັງລາວ ມະຫາຊົນ ແລະ ບໍລິສັດ ຊີມັງລາວ ຈຳກັດ, ໄດ້ຖືກສ້າງຕັ້ງຂຶ້ນຕາມກົດລະບຽບພາຍໃນຂອງບໍລິສັດທີ່ເຊັນຮັບຮອງ ທີ່ນະຄອນຫຼວງວຽງຈັນ, ສປປ ລາວ ໃນວັນທີ 15 ທັນວາ 1998 ລະຫວ່າງ ລັດວິສາຫະກິດພັດທະນາກະສິກຳ-ອຸດສາຫະກຳ ແລະ ບໍລິການຂາອອກ-ຂາເຂົ້າ ກັບ ບໍລິສັດຮ່ວມມືສາກົນດ້ານເສດຖະກິດ-ເຕັກນິກຢຸນນານ ສປ ຈີນ.

ໃນວັນທີ 14 ກຸມພາ 2018, ບໍລິສັດໄດ້ຮັບໜັງສືຢັ້ງຢືນຜົນສຳເລັດການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນຄັ້ງທຳອິດ (IPO) ເລກທີ 0008/ຕລຊລ ອອກໂດຍ ຄະນະກຳມະການຄຸ້ມຄອງຫຼັກຊັບ, ເຊິ່ງບໍລິສັດໄດ້ດຳເນີນການສະເໜີຂາຍຮຸ້ນຕໍ່ສາທາລະນະ ໂດຍມີຮຸ້ນຂອງບໍລິສັດຈຳນວນ 40,004,000 ຮຸ້ນ (ພາຍໃຕ້ຊື່ຫຍໍ້ "ບຊລ") ເຊິ່ງໄດ້ຖືກຈົດທະບຽນຢ່າງເປັນທາງການໃນຕະຫຼາດຫຼັກຊັບລາວ.

ໃນວັນທີ 2 ພຶດສະພາ 2023, ບໍລິສັດໄດ້ຮັບໃບອະນຸຍາດລົງທຶນສະບັບໃໝ່ ເລກທີ 119.2023/ກຜທ, ອອກໂດຍ ກະຊວງ ແຜນການ ແລະ ການລົງທຶນ ເຊິ່ງປ່ຽນແປງກິດຈະກຳຫຼັກທາງທຸລະກິດຂອງບໍລິສັດ. ກິດຈະກຳຫຼັກຂອງບໍລິສັດໄດ້ປ່ຽນຈາກ ການຜະລິດ, ການຂາຍສົ່ງ ແລະ ການຂາຍຍ່ອຍຊີມັງ ແລະ ຜະລິດຕະພັນຊີມັງອື່ນໆທີ່ກ່ຽວຂ້ອງ ມາເປັນການທ່ອງທ່ຽວ (ຂາເຂົ້າ – ຂາອອກ) ແລະ ການກໍ່ສ້າງຕຶກອາຄານຄອນໂດສຳລັບຈຳໜ່າຍ.

ໃນວັນທີ 30 ຕຸລາ 2023, ບໍລິສັດໄດ້ຮັບໃບທະບຽນວິສາຫະກິດສະບັບລ່າສຸດ ເລກທີ 3330/ຈທອ ຈາກກະຊວງອຸດສາຫະກຳ ແລະ ການຄ້າ ໄດ້ອອກໃບທະບຽນວິສາຫະກິດສຳລັບການປ່ຽນຊື່ຂອງບໍລິສັດຈາກ ບໍລິສັດ ຊີມັງລາວ ມະຫາຊົນ ມາເປັນ ກຸ່ມບໍລິສັດ ທ່ອງທ່ຽວອັດທະນະທຳລາວ ມະຫາຊົນ.

ໃນວັນທີ 24 ມິຖຸນາ 2025, ບໍລິສັດໄດ້ຮັບໃບອະນຸຍາດດຳເນີນທຸລະກິດຄອນໂດມິນຽມຈາກກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ເຊິ່ງໄດ້ອະນຸຍາດໃຫ້ບໍລິສັດດຳເນີນກິດຈະການທີ່ກ່ຽວຂ້ອງກັບຄອນໂດມິນຽມເພື່ອຂາຍ.

ສຳນັກງານໃຫຍ່ທີ່ໄດ້ລົງທະບຽນຂອງບໍລິສັດຕັ້ງຢູ່ ບ້ານໂພນພະເນົາ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ. ບໍລິສັດຍັງມີໂຮງງານຊີມັງວັງວຽງ ຫຼັງ 2 ຢູ່ເມືອງວັງວຽງ, ແຂວງ ວຽງຈັນ, ສປປ ລາວ.

ນະວັນທີ 31 ທັນວາ 2025, ບໍລິສັດມີພະນັກງານ 52 ຄົນ (31 ທັນວາ 2024: ພະນັກງານ 52 ຄົນ).

1. ຂໍ້ມູນບໍລິສັດ (ຕໍ່)

ບໍລິສັດໃນເຄືອ

ນະວັນທີ 31 ທັນວາ 2025, ບໍລິສັດມີ ບໍລິສັດໃນເຄືອທັງໝົດ 8 ບໍລິສັດທີ່ມີຂໍ້ມູນທາງການເງິນ ດັ່ງຕໍ່ໄປນີ້:

ຊື່ບໍລິສັດ	*ໃບທະບຽນວິສາຫະກິດເລກທີ*	*ປະເພດທຸລະກິດ*	*% ເປັນເຈົ້າຂອງໂດຍ LCTC*
ບໍລິສັດ ພັດທະນາກະສິກຳ ວິທະຍາສາດ ແລະ ເຕັກໂນໂລຊີ ລາວ ຈຳກັດຜູ້ດຽວ	ເລກທີ 2118/ຈທວ ລົງວັນທີ 17 ມິຖຸນາ 2024 ອອກໂດຍ ກະຊວງອຸດສາຫະກຳ ແລະ ການຄ້າ	ການຈຳໜ່າຍພືດສະໜຸນໄພເພື່ອສົ່ງອອກ, ປູກເພື່ອຂາຍພາຍໃນ ແລະ ສົ່ງອອກ	100%
ບໍລິສັດ ກໍ່ສ້າງ ພັດທະນາ ຕິອະເມືອງລາວ ຈຳກັດຜູ້ດຽວ	ເລກທີ 2434/ຈທວ ລົງວັນທີ 05 ກໍລະກົດ 2024 ອອກ ໂດຍກະຊວງອຸດສາຫະກຳ ແລະ ການຄ້າ	ການບໍລິການທີ່ປຶກສາດ້ານການກໍ່ສ້າງ	100%
ບໍລິສັດ ວັດສະດຸກໍ່ສ້າງໃໝ່ລາວ ຈຳກັດຜູ້ດຽວ	ເລກທີ 2422/ຈທວ ລົງວັນທີ 10 ສິງຫາ 2023 ອອກໂດຍ ກະຊວງອຸດສາຫະກຳ ແລະ ການຄ້າ	ວັດສະດຸການກໍ່ສ້າງ ແລະ ເຄື່ອງມືອຸປະກອນ	100%
ບໍລິສັດ ສະຖາປັນແຜນການ ແລະ ການອອກແບບທ່ອງທ່ຽວແຫ່ງຊາດລາວ ຈຳກັດຜູ້ດຽວ	ເລກທີ 3113/ຈທວ ລົງວັນທີ 26 ກັນຍາ 2023 ອອກໂດຍ ກະຊວງອຸດສາຫະກຳ ແລະ ການຄ້າ	ບໍລິການອອກແບບອາຄານ, ການອອກແບບ ການທ່ອງທ່ຽວ, ອອກແບບ ແລະ ກໍ່ສ້າງ ວຽກງານສາທາລະນະ	100%
ບໍລິສັດ ບໍລິການວາງສະແດງສາກົນລາວ ຈຳກັດຜູ້ດຽວ	ເລກທີ 0414/ຈທວ ລົງວັນທີ 01 ກຸມພາ 2024 ອອກໂດຍ ກະຊວງອຸດສາຫະກຳ ແລະ ການຄ້າ	ການຜະລິດສື່ບັນເທີງ, ຮູບເງົາ ແລະ ການ ໂຄສະນາ	100%
ບໍລິສັດ ພັດທະນາຊັບພະຍາກອນແຮ່ລາວ ຈຳກັດ	ເລກທີ 0767/ຈທວ ລົງວັນທີ 29 ກຸມພາ 2024 ອອກໂດຍ ກະຊວງອຸດສາຫະກຳ ແລະ ການຄ້າ	ຂຸດຄົ້ນ ແລະ ສຳຫຼວດພື້ນທີ່ຂຸດຄົ້ນບໍ່ແຮ່	100%
ບໍລິສັດ ສະຖາປັນສຳຫຼວດ ແລະ ອອກແບບແຫ່ງຊາດລາວ ຈຳກັດຜູ້ດຽວ	ເລກທີ 1495/ຈທວ ລົງວັນທີ 06 ພຶດສະພາ 2024 ອອກ ໂດຍ ກະຊວງອຸດສາຫະກຳ ແລະ ການຄ້າ.	ການສຳຫຼວດ ແລະ ການອອກແບບອາຄານ	100%
ບໍລິສັດ ສູນຝຶກອົບຮົມ ແລະ ການສຶກສາ (ລາວ) ຈຳກັດຜູ້ດຽວ	ເລກທີ 1485/ຈທວ ລົງວັນທີ 06 ພຶດສະພາ 2024 ອອກ ໂດຍກະຊວງອຸດສາຫະກຳ ແລະ ການຄ້າ	ບໍລິການທີ່ປຶກສາທາງດ້ານການສຶກສາ	100%
ບໍລິສັດ ເຄື່ອງຈັກ ແລະ ອຸປະກອນວິສະວະກຳ ຈຳກັດ	ເລກທີ 016090/ຈທວ ລົງວັນທີ 22 ພຶດສະພາ 2025 ອອກໂດຍກະຊວງອຸດສາຫະກຳ ແລະ ການຄ້າ	ອຸປະກອນເຄື່ອງຈັກວິສະວະກຳ	100%

2. ພື້ນຖານຂອງການກະກຽມ

ອີງຕາມກົດໝາຍວ່າດ້ວຍບັນຊີ ສະບັບເລກທີ 46/ສພຊ ລົງວັນທີ 20 ພະຈິກ 2023, ບັນດາໜ່ວຍງານສາທາລະນະປະໂຫຍດ ລວມທັງບໍລິສັດຈົດທະບຽນຄວນນຳໃຊ້ມາດຕະຖານການລາຍງານການເງິນສາກົນ ("IFRS") ໃນການກະກຽມລາຍງານການເງິນປະຈຳປີ, ເລີ່ມແຕ່ປີ 2017. ອີງຕາມຈົດໝາຍເຫດທາງລັດຖະການ. ສະບັບເລກທີ 1137/ສພຊ, ລົງວັນທີ 27 ເມສາ 2020 ໂດຍກະຊວງການເງິນ, ຫ້ວໜ່ວຍຖືຜົນປະໂຫຍດສາທາລະນະ ໄດ້ອະນຸຍາດໃຫ້ເລື່ອນເວລາການສະໝັກ IFRS ໄປຈົນເຖິງວັນທີ 1 ມັງກອນ 2026.

ສຳລັບໄລຍະປີທີ່ສິ້ນສຸດ ວັນທີ 31 ທັນວາ 2025, ບໍລິສັດ ແມ່ນໄດ້ຖືກກະກຽມເອກະສານລາຍງານການເງິນແບບແຍກກິດຈະການໂດຍສອດຄ່ອງກັບນະໂຍບາຍບັນຊີເຊິ່ງໄດ້ລະບຸໄວ້ໃນບົດອະທິບາຍເລກທີ 3 ຂອງ ເອກະສານລາຍງານການເງິນແບບແຍກກິດຈະການ. ນະໂຍບາຍບັນຊີດັ່ງກ່າວບໍ່ໄດ້ມີວັດຖຸປະສົງໃນການນຳສະເໜີຖານະການເງິນແບບແຍກກິດຈະການ, ຜົນຂອງການດຳເນີນງານແບບແຍກກິດຈະການ ແລະ ກະແສເງິນສົດແບບແຍກກິດຈະການຂອງບໍລິສັດຕາມຫຼັກການບັນຊີສາກົນທີ່ຖືກຍອມຮັບທົ່ວໄປ.

ເອກະສານລາຍງານການເງິນແບບແຍກກິດຈະການຂອງບໍລິສັດ ແມ່ນໄດ້ຖືກກະກຽມໂດຍນຳໃຊ້ຫຼັກການຕົ້ນທຶນເດີມ. ເອກະສານລາຍງານການເງິນແບບແຍກກິດຈະການສະບັບນີ້ ແມ່ນຖືກລາຍງານເປັນສະກຸນເງິນກີບລາວ ("ກີບ"). ເຊິ່ງເປັນສະກຸນເງິນຫຼັກທີ່ນຳໃຊ້ໃນການເຮັດທຸລະກຳ ແລະ ຊຳລະສະສາງຂອງບໍລິສັດ.

ນະວັນທີ 31 ທັນວາ 2024, ອັດຕາເງິນເຟີ້ສະສົມໃນ ສປປ ລາວ ໃນໄລຍະ 36 ເດືອນຜ່ານມາໄດ້ເກີນ 100%, ເຊິ່ງຈັດປະເພດປະເທດເປັນເສດຖະກິດທີ່ມີອັດຕາເງິນເຟີ້ສູງ, ອີງຕາມບົດລາຍງານຂອງທະນາຄານກາງ (BOL) (https://www.bol.gov.la/en/inflation). ເຖິງຢ່າງໃດກໍ່ຕາມ, ບໍລິສັດບໍ່ໄດ້ຈັດຕັ້ງປະຕິບັດນະໂຍບາຍການບັນຊີໃດໆ ເພື່ອແກ້ໄຂຜົນກະທົບຂອງອັດຕາເງິນເຟີ້ສູງ ເນື່ອງຈາກບໍ່ມີຄຳແນະນຳສະເພາະຈາກມາດຕະຖານການລາຍງານທາງດ້ານການເງິນຂອງລາວ ("FRS") ແລະ ກະຊວງການເງິນ ("MOF"). ນັບຕັ້ງແຕ່ວັນທີ 1 ມັງກອນ 2025 ເປັນຕົ້ນໄປ, ເສດຖະກິດຂອງລາວບໍ່ໄດ້ຖືກຖືວ່າເປັນເສດຖະກິດທີ່ມີອັດຕາເງິນເຟີ້ສູງອີກຕໍ່ໄປ.

ຂໍ້ສົມມຸດຖານກ່ຽວກັບຄວາມສົບເນື່ອງຂອງການດຳເນີນທຸລະກິດ

ບໍລິສັດໄດ້ຂາດທຶນສຸດທິມູນຄ່າ 23.27 ຕື້ກີບ ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2025. ນະວັນທີດັ່ງກ່າວ, ບໍລິສັດມີຍອດຂາດທຶນສະສົມມູນຄ່າ 103.12 ຕື້ກີບເກີນທຶນຈົດທະບຽນທີ່ຈັດສັນໄວ້ 83.12 ຕື້ກີບ, ແລະ ໜີ້ສິນໝຸນວຽນຂອງບໍລິສັດຫຼາຍກວ່າຊັບສິນໝຸນວຽນ 66.70 ຕື້ກີບ. ໃນວັນທີ 25 ສິງຫາ 2020, ບໍລິສັດໄດ້ອອກແຈ້ງການເລກທີ 202/ບຊລ ກ່ຽວກັບການຢຸດຜະລິດຊົ່ວຄາວຈົນເຖິງການແຈ້ງການຄັ້ງຕໍ່ໄປ. ບໍລິສັດໄດ້ປັບປຸງແກ້ໄຂການເຄື່ອນໄຫວທຸລະກິດຕົ້ນຕໍໃຫ້ສອດຄ່ອງກັບໃບອະນຸຍາດການລົງທຶນສະບັບເລກທີ 119.2023/ກຜທ ລົງວັນທີ 02 ພຶດສະພາ 2023 ອອກໂດຍກະຊວງແຜນການ ແລະ ການລົງທຶນ. ກິດຈະກຳຫຼັກຂອງບໍລິສັດໄດ້ປ່ຽນຈາກການຜະລິດ, ການຂາຍສົ່ງ ແລະ ການຂາຍຍ່ອຍຊີມັງ ແລະ ຜະລິດຕະພັນຊີມັງອື່ນໆທີ່ກ່ຽວຂ້ອງ ມາເປັນການໃຫ້ການບໍລິການການທ່ອງທ່ຽວ (ພາຍໃນ ແລະ ຕ່າງປະເທດ) ແລະ ການກໍ່ສ້າງຕຶກອາຄານຄອນໂດສຳລັບຈຳໜ່າຍ. ເງື່ອນໄຂດັ່ງກ່າວນີ້ໄດ້ຊີ້ໃຫ້ເຫັນຄວາມບໍ່ແນ່ນອນທີ່ມີຄວາມສຳຄັນ ເຊິ່ງອາດເກີດການສົງໄສຢ່າງໃຫຍ່ຫຼວງກ່ຽວກັບຄວາມສາມາດໃນການສືບເນື່ອງໃນການດຳເນີນທຸລະກິດຂອງບໍລິສັດ.

ຄະນະອຳນວຍການຂອງບໍລິສັດໄດ້ກະກຽມການຄາດຄະເນກະແສເງິນສົດເພື່ອສະໜັບສະໜຸນການຊຳລະສະສາງ ແລະ ແຜນການດຳເນີນງານສຳລັບ 12 ເດືອນຂ້າງໜ້າ, ໂດຍອີງໃສ່ບົນພື້ນຖານຄວາມຄາດຫວັງ (i) ຈາກການສະ ໜັບສະໜຸນທາງການເງິນຂອງຜູ້ຖືຮຸ້ນ ແລະ (ii) ຄວາມສາມາດໃນການຮັບເງິນການຂາຍຊັບສິນ. ຜູ້ບໍລິຫານຂອງບໍລິສັດໄດ້ຮັບເອກະສານສະໜັບສະໜຸນທາງການເງິນຈາກຢຸນນານ ເຫີງຊີ ເຊິ່ງເປັນຜູ້ຖືຮຸ້ນລາຍໃຫຍ່ເຊິ່ງໄດ້ກຳນົດໃນຂໍ້ຕົກລົງໃນການສະໜອງການຊ່ວຍເຫຼືອທາງການເງິນໃຫ້ມີຄວາມພຽງພໍຕໍ່ການສະສາງໜີ້ສິນເມື່ອຄົບກຳນົດໃນການຊຳລະໃນປີຕໍ່ໄປໂດຍບໍ່ມີການຫຼຸດຜ່ອນ. ບົນພື້ນຖານນີ້, ຄະນະອຳນວຍການຂອງບໍລິສັດຍັງຕ້ອງພິຈາລະນາຄວາມເໝາະສົມທີ່ກະກຽມເອກະສານລາຍງານການເງິນແບບແຍກກິດຈະການຂອງບໍລິສັດບົນພື້ນຖານຄວາມສົບເນື່ອງຂອງການດຳເນີນທຸລະກິດ.

2. ພື້ນຖານຂອງການກະກຽມ (ຕໍ່)

ຂໍ້ສົມມຸດຖານກ່ຽວກັບຄວາມສືບເນື່ອງຂອງການດຳເນີນທຸລະກິດ (ຕໍ່)

ອີງຕາມເອກະສານລາຍງານທາງການເງິນແບບແຍກກິດຈະການຈະບໍ່ລວມການດັດແກ້ໃດໆທີ່ອາດຈຳເປັນ ຖ້າຫາກບໍລິສັດບໍ່ຄວນສາມາດສືບເນື່ອງຂອງການດຳເນີນທຸລະກິດ.

ປີການບັນຊີ

ປີການບັນຊີຂອງບໍລິສັດແມ່ນ ເລີ່ມຈາກ ວັນທີ 1 ມັງກອນ ແລະ ສິ້ນສຸດ ວັນທີ 31 ທັນວາ.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ

ຊັບສິນ, ອາຄານ ແລະ ອຸປະກອນ

ຊັບສິນ, ອາຄານ ແລະ ອຸປະກອນແມ່ນບັນທຶກຕາມມູນຄ່າຕົ້ນທຶນລົບໃຫ້ຄ່າຫຼຸ້ຍຫ້ຽນສະສົມ.

ຕົ້ນທຶນຂອງຊັບສິນ, ອາຄານ ແລະ ອຸປະກອນທີ່ຊື້ໂດຍບໍລິສັດ ເຊິ່ງປະກອບດ້ວຍລາຄາຊື້ ແລະ ທຸກຄ່າໃຊ້ຈ່າຍທີ່ຕິດພັນໂດຍກົງທີ່ເກີດຂຶ້ນໃນການເຮັດໃຫ້ຊັບສິນໃຫ້ຢູ່ໃນສະພາບທີ່ສາມາດໃຊ້ງານຕາມຈຸດປະສົງຂອງການນຳໃຊ້. ລາຍຈ່າຍສຳລັບການເພີ່ມເຕີມ, ການປັບປຸງ ແລະ ການຟື້ນຟູແມ່ນບັນທຶກເຂົ້າໃນມູນຄ່າຕົ້ນທຶນໃນຂະນະທີ່ລາຍຈ່າຍສຳລັບການບຳລຸງຮັກສາ ແລະ ການສ້ອມແປງແມ່ນບັນທຶກເຂົ້າໃນໃບລາຍງານຜົນການດຳເນີນງານແບບແຍກກິດຈະການ.

ເມື່ອລາຍການຂອງຊັບສິນ, ອາຄານ ແລະ ອຸປະກອນໄດ້ຖືກຂາຍ ຫຼື ສະສາງ, ຕົ້ນທຶນ ແລະ ຄ່າຫຼຸ້ຍຫ້ຽນສະສົມ ແມ່ນຈະຖືກຕັດອອກຈາກໃບລາຍງານຖານະການເງິນແບບແຍກກິດຈະການ ແລະ ທຸກໆກຳໄລ ຫຼື ຂາດທຶນຈາກການສະສາງ ແມ່ນຈະຖືກລວມຢູ່ໃນລາຍຮັບການດຳເນີນງານອື່ນໆ ຫຼື ບັນຊີລາຍຈ່າຍ ໃນໃບລາຍງານຜົນການດຳເນີນງານແບບແຍກກິດຈະການຕາມລຳດັບ.

ຊັບສິນພວມກໍ່ສ້າງ ສະແດງເຖິງຊັບສິນພາຍໃຕ້ການກໍ່ສ້າງ ເຊິ່ງປະກອບມີຄ່າໃຊ້ຈ່າຍໃນການກໍ່ສ້າງ ແລະ ຄ່າໃຊ້ຈ່າຍໂດຍກົງອື່ນໆ.

ຊັບສິນ, ອາຄານ ແລະ ອຸປະກອນ ທີ່ຖືກຫັກຄ່າຫຼຸ້ຍຫ້ຽນໝົດຕາມອາຍຸການນຳໃຊ້ຈະຖືກເກັບຮັກສາໄວ້ໃນບັນຊີ ຈົນກວ່າຈະບໍ່ມີການນຳໃຊ້ ແລະ ຈະບໍ່ມີຄ່າຫຼຸ້ຍຫ້ຽນທີ່ຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານແບບແຍກກິດຈະການອີກ.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

ຄ່າຫຼຸ້ຍຫ້ຽນ

ຄ່າຫຼຸ້ຍຫ້ຽນຂອງຊັບສິນ, ອາຄານ ແລະ ອຸປະກອນແມ່ນນຳໃຊ້ວິທີຄິດໄລ່ແບບສະໝ່ຳສະເໝີຕາມອາຍຸການນຳໃຊ້ຂອງຊັບສິນແຕ່ລະປະເພດດັ່ງນີ້:

ອາຄານ ແລະ ສິ່ງປຸກສ້າງ	5 ຫາ 20 ປີ
ເຄື່ອງຈັກ ແລະ ອຸປະກອນ	5 ປີ
ພາຫະນະຂົນສົ່ງ	5 ປີ
ການປັບປຸງສິດທິໃນການເຊົ່າ	5 ຫາ 10 ປີ
ເຄື່ອງໃຊ້ຫ້ອງການ	5 ຫາ 10 ປີ
ອື່ນໆ	10 ປີ

ອາຍຸການໃຊ້ງານຂອງຊັບສິນເຊົ່າພວມປັບປຸງ ແມ່ນຖືກກຳນົດໂດຍການຄາດການຝ່າຍອຳນວຍການກ່ຽວກັບການໃຊ້ງານ ແລະ ອາດຈະແຕກຕ່າງກັບໄລຍະເວລາຂອງສັນຍາ.

ການຫັກຄ່າຫຼຸ້ຍຫ້ຽນຂອງຊັບສິນ, ອາຄານ ແລະ ອຸປະກອນທີ່ຊື້ເພີ່ມ ຫຼື ສະສ້າງອອກພາຍໃນໄລຍະ ແມ່ນຄິດໄລ່ອີງຕາມສັດສ່ວນໄລຍະເວລາໃນການນຳໃຊ້ນັບແຕ່ມື້ທີ່ເລີ່ມຕົ້ນນຳໃຊ້ ແລະ ມື້ທີ່ສະສ້າງອອກຕົວຈິງ. ບໍ່ມີການຫັກຄ່າຫຼຸ້ຍຫ້ຽນສຳລັບຊັບສິນພວມກໍ່ສ້າງຈົນກວ່າຈະເຖິງເວລາທີ່ຊັບສິນດັ່ງກ່າວສຳເລັດ ແລະ ຖືກນຳໃຊ້.

ຊັບສິນບັດຄົງທີ່ບໍ່ມີຕົວຕົນ

ຊັບສິນບັດຄົງທີ່ບໍ່ມີຕົວຕົນ ປະກອບດ້ວຍ ຊອບແວຄອມພິວເຕີ ແລະ ສິດນຳໃຊ້ທີ່ດິນ. ຕົ້ນທຶນຂອງຊອບແວປະກອບດ້ວຍ ລາຄາຊື້ ບວກໃຫ້ກັບຕົ້ນທຶນໂດຍກົງຕ່າງໆທີ່ຈະເຮັດໃຫ້ຊອບແວສາມາດເຮັດວຽກໄດ້ຕາມຈຸດປະສົງການໃຊ້ງານ.

ສິດການນຳໃຊ້ທີ່ດິນ ຈະບໍ່ມີກຳນົດໄລຍະເວລາການນຳໃຊ້ ແລະ ແລະ ຖືກລາຍງານໃນມູນຄ່າຕົ້ນທຶນ. ຕົ້ນທຶນຂອງສິດໃນການນຳໃຊ້ທີ່ດິນ ເຊິ່ງປະກອບດ້ວຍ ລາຄາຊື້ ແລະ ຕົ້ນທຶນໂດຍກົງຕ່າງໆແມ່ນຈະບໍ່ມີການຫັກຄ່າເສື່ອມ.

ຊັບສິນພວມກໍ່ສ້າງ

ຊັບສິນພວມກໍ່ສ້າງແມ່ນສະແດງເຖິງຄ່າໃຊ້ຈ່າຍຂອງການຊື້ຊັບສິນໃຫມ່ທີ່ຍັງບໍ່ທັນໄດ້ຕິດຕັ້ງຢ່າງເຕັມທີ່ ຫຼື ຄ່າໃຊ້ຈ່າຍໃນການກໍ່ສ້າງທີ່ຍັງບໍ່ທັນໄດ້ສຳເລັດສົມບູນ. ຊັບສິນພວມກໍ່ສ້າງແມ່ນລະບຸໄວ້ໃນຄ່າໃຊ້ຈ່າຍ, ເຊິ່ງລວມເຖິງຄ່າໃຊ້ຈ່າຍທີ່ຈຳເປັນທັງຫມົດໃນການກໍ່ສ້າງ, ສ້ອມແປງ, ຂະຫຍາຍ, ຫຼື ປັບປຸງໂຄງການໃຫມ່ດ້ວຍເຕັກໂນໂລຢີ, ເຊັ່ນ: ຄ່າກໍ່ສ້າງ, ຄ່າເຄື່ອງມື ແລະ ອຸປະກອນ, ຄ່າໃຊ້ຈ່າຍໃນການຄຸ້ມຄອງໂຄງການ, ຄ່າໃຊ້ຈ່າຍທີ່ປຶກສາການກໍ່ສ້າງ, ແລະ ຄ່າໃຊ້ຈ່າຍໃນການກູ້ຢືມທີ່ສາມາດຫັກລົບໄດ້.

ຊັບສິນພວມກໍ່ສ້າງຈະຖືກໂອນເຂົ້າບັນຊີຊັບສິນຄົງທີ່ທີ່ເຫມາະສົມເມື່ອຊັບສິນເຫຼົ່ານີ້ຖືກຕິດຕັ້ງຢ່າງເຕັມສ່ວນ ຫຼື ໂຄງການກໍ່ສ້າງສຳເລັດສົມບູນ, ແລະ ຄ່າຫຼຸ້ຍຫ້ຽນຂອງຊັບສິນເຫຼົ່ານີ້ຈະເລີ່ມຕົ້ນເມື່ອຊັບສິນພ້ອມສຳລັບການນຳໃຊ້ທີ່ມີຈຸດປະສົງ.

ຄ່າໃຊ້ຈ່າຍໃນການກໍ່ສ້າງຖືກຮັບຮູ້ເປັນລາຍຈ່າຍໃນເວລາທີ່ຄ່າໃຊ້ຈ່າຍດັ່ງກ່າວບໍ່ໄດ້ເປັນໄປຕາມເງື່ອນໄຂທີ່ຈະຮັບຮູ້ເປັນຊັບສິນຄົງທີ່.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

ສັນຍາເຊົ່າ

ໃນການກຳນົດຕົກລົງເປັນສັນຍາເຊົ່າ, ຫຼື ປະກອບດ້ວຍສັນຍາເຊົ່ານັ້ນ, ແມ່ນອີງໃສ່ເນື້ອໃນຂອງຂໍ້ຕົກລົງ ແລະ ຮຽກຮ້ອງໃຫ້ມີການປະເມີນວ່າການປະຕິບັດຕາມຂໍ້ຕົກລົງນັ້ນຂຶ້ນຢູ່ກັບການໃຊ້ຊັບສິນ ຫຼື ຊັບສິນສະເພາະ ແລະ ການຕົກລົງທີ່ບົ່ງບອກເຖິງສິດໃນການໃຊ້ຊັບສິນ.

ບໍລິສັດໃນຖານະຜູ້ເຊົ່າ

ສັນຍາເຊົ່າ, ເຊິ່ງຄວາມສ່ຽງ ແລະ ຜົນປະໂຫຍດທັງໝົດຂອງຄວາມເປັນເຈົ້າຂອງລາຍການທີ່ເຊົ່າ ບໍ່ໄດ້ໂອນໄປຫາບໍລິສັດເປັນສາລະສຳຄັນຄືສັນຍາເຊົ່າດຳເນີນງານ. ເງິນທີ່ຈ່າຍຕາມສັນຍາເຊົ່າດຳເນີນງານຖືກຮັບຮູ້ເປັນລາຍຈ່າຍຢູ່ໃນໃບລາຍງານຜົນການດຳເນີນງານໂດຍວິທີເສັ້ນຊື່ຕະຫຼອດອາຍຸການສັນຍາເຊົ່າ. ໜີ້ຕ້ອງສິ່ງຄ່າເຊົ່າທີ່ອາດຈະເກີດຂຶ້ນແມ່ນຖືກຮັບຮູ້ເປັນລາຍຈ່າຍໃນປີທີ່ລາຍຈ່າຍດັ່ງກ່າວເກີດຂຶ້ນ.

ເຄື່ອງໃນສາງ

ເຄື່ອງໃນສາງແມ່ນຖືກສະແດງໃນມູນຄ່າທີ່ຕ່ຳກວ່າຕົ້ນທຶນທີ່ເກີດຂຶ້ນໃນການນຳເອົາເຄື່ອງໃນສາງມາຢູ່ໃນສະຖານທີ່ ແລະ ສະພາບໃນປະຈຸບັນ ແລະ ຖືກຮັບຮູ້ຕາມມູນຄ່າສຸດທິທີ່ໄດ້ຮັບ.

ມູນຄ່າສຸດທິທີ່ໄດ້ຮັບ ແມ່ນລາຄາທີ່ຄາດວ່າຈະຂາຍຕາມເງື່ອນໄຂທາງທຸລະກິດທົ່ວໄປ ລົບຄ່າໃຊ້ຈ່າຍຄາດຄະເນ ທີ່ຈະເຮັດໃຫ້ເປັນສິນຄ້າສຳເລັດຮູບ ແລະ ຄ່າໃຊ້ຈ່າຍຄາດຄະເນທີ່ເກີດຂຶ້ນຈາກການຂາຍ.

ລະບົບການຕິດຕາມສາງເປັນໄລຍະ ແມ່ນຖືກນຳໃຊ້ໃນການບັນທຶກເຄື່ອງໃນສາງເຊິ່ງຖືກຕີມູນຄ່າດັ່ງຕໍ່ໄປນີ້:

ວັດຖຸດິບ, ວັດຖຸສິ້ນເປືອງ, ເຄື່ອງມື ແລະ ອຸປະກອນ	–	ຕົ້ນທຶນແມ່ນ ຄິດໄລ່ຕາມການຕົ້ນທຶນສະເລ່ຍຖ່ວງໜັກ.
ສິນຄ້າກຳລັງຜະລິດ ແລະ ສິນຄ້າສຳເລັດຮູບ	–	ຕົ້ນທຶນຂອງວັດຖຸດິບ ແລະ ຄ່າແຮງງານທາງກົງບວກກັບຄ່າໃຊ້ຈ່າຍການຜະລິດໂດຍອີງໃສ່ຄວາມສາມາດປະຕິບັດງານປົກກະຕິ ບົນພື້ນຖານມູນຄ່າຕົ້ນທຶນສະເລ່ຍຖ່ວງໜັກ

ຊັບສິນໃນສາງ

ຊັບສິນທີ່ຊື້ເຂົ້າມາໃໝ່ ແລະ ກຳລັງກໍ່ສ້າງເພື່ອຂາຍໃນການດຳເນີນທຸລະກິດທົ່ວໄປ, ແທນທີ່ຈະຖືໄວ້ເພື່ອເຊົ່າ ຫຼື ເປັນການເພີ່ມມູນຄ່າທຶນ, ຖືເປັນຊັບສິນໃນສາງ ແລະ ຖືກວັດແທກດ້ວຍຕົ້ນທຶນທີ່ຕ່ຳກວ່າ ແລະ ມູນຄ່າສຸດທິທີ່ອາດຈະໄດ້ຮັບ (NRV).

ໂດຍສະເພາະ, ນີ້ແມ່ນຊັບສິນທີ່ຢູ່ອາໄສທີ່ບໍລິສັດພັດທະນາ ແລະ ຕັ້ງໃຈຈະຂາຍກ່ອນ, ຫຼື ເມື່ອສຳເລັດການພັດທະນາ.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

ຊັບສິນໃນສາງ (ຕໍ່)

ຕົ້ນທຶນທີ່ເກີດຂຶ້ນໃນການນຳເອົາຊັບສິນແຕ່ລະຢ່າງຖືກລະບຸສະຖານທີ່ ແລະ ເງື່ອນໄຂໃຫ້ເໝາະສົມ ປະກອບມີດັ່ງນີ້:

- ຈຳນວນເງິນທີ່ຈ່າຍໃຫ້ຜູ້ຮັບເໝົາເພື່ອການພັດທະນາ
- ລາຍຈ່າຍຂອງການກູ້ຢືມ, ຄ່າໃຊ້ຈ່າຍໃນການວາງແຜນ ແລະ ການອອກແບບ, ຄ່າໃຊ້ຈ່າຍໃນການກະກຽມສະຖານທີ່, ຄ່າທຳນຽມດ້ານວິຊາຊີບສຳລັບການບໍລິການທາງດ້ານກົດໝາຍ, ຄ່າໃຊ້ຈ່າຍໃນການພັດທະນາ ແລະ ຄ່າໃຊ້ຈ່າຍອື່ນໆທີ່ກ່ຽວຂ້ອງ

ມູນຄ່າສຸດທິທີ່ຈະໄດ້ຮັບ (NRV) ແມ່ນການຄາດຄະເນລາຄາຂາຍໃນການດຳເນີນທຸລະກິດທົ່ວໄປ, ໂດຍອີງໃສ່ລາຄາຕະຫຼາດໃນວັນທີທີ່ລາຍງານ, ຫັກດ້ວຍຕົ້ນທຶນທີ່ຄາດຄະເນໃນການດຳເນີນງານໃຫ້ສຳເລັດ ແລະ ຄ່າໃຊ້ຈ່າຍທີ່ຄາດຄະເນທີ່ຈຳເປັນທີ່ໃຊ້ເພື່ອການຂາຍ.

ເມື່ອຊັບສິນໃນສາງຖືກຂາຍ, ມູນຄ່າຕາມບັນຊີຂອງຊັບສິນຈະຖືກຮັບຮູ້ເປັນຄ່າໃຊ້ຈ່າຍໃນໄລຍະເວລາທີ່ລາຍຮັບທີ່ກ່ຽວຂ້ອງຖືກຮັບຮູ້. ມູນຄ່າຕາມບັນຊີຂອງຊັບສິນໃນສາງທີ່ຮັບຮູ້ໃນກຳໄລ ຫຼື ຂາດທຶນ ແມ່ນຖືກກຳນົດໂດຍອ້າງອີງໃສ່ຄ່າໃຊ້ຈ່າຍທີ່ກ່ຽວຂ້ອງໂດຍກົງຂອງຊັບສິນທີ່ຂາຍ ແລະ ການຈັດສັນຄ່າໃຊ້ຈ່າຍທີ່ກ່ຽວຂ້ອງອື່ນໆໂດຍອີງໃສ່ຂະໜາດທີ່ກ່ຽວຂ້ອງຂອງຊັບສິນທີ່ຂາຍ.

ເງິນແຮສຳລັບຄ່າເສື່ອມມູນຄ່າເຄື່ອງໃນສາງ

ເງິນແຮສຳລັບຄ່າເສື່ອມມູນຄ່າເຄື່ອງໃນສາງແມ່ນເກີດຈາກການປະເມີນການສູນເສຍທີ່ເກີດຂຶ້ນຍ້ອນການເສື່ອມມູນຄ່າ (ຈາກການຫຼຸດລົງ, ຄວາມເສຍຫາຍ, ການລ້າສະໄໝ ແລະ ອື່ນໆ) ຂອງເຄື່ອງໃນສາງ ໂດຍປະເມີນຕາມຫຼັກຖານທີ່ເໝາະສົມຂອງການເສື່ອມມູນຄ່າທີ່ມີຢູ່ນະວັນທີຂອງໃນລາຍງານຖານະການເງິນ.

ການເພີ່ມຂຶ້ນ ແລະ ຫຼຸດລົງຂອງຍອດເຫຼືອເງິນແຮແມ່ນບັນທຶກເຂົ້າລາຍຈ່າຍໃນການດຳເນີນງານສຳລັບເງິນແຮທີ່ຫັກເພີ່ມເຕີມ ແລະ ຈະຖືກບັນທຶກເຂົ້າໃນລາຍຮັບໃນການດຳເນີນງານໃນກໍລະນີເກັບຄືນເງິນແຮຈາກເຄື່ອງໃນສາງ ທີ່ສະແດງໃນໃບລາຍງານຜົນການດຳເນີນງານແບບແຍກກິດຈະການ.

ການລົງທຶນໃນບໍລິສັດໃນເຄືອ

ບໍລິສັດໃນເຄືອແມ່ນຫົວໜ່ວຍທຸລະກິດທັງໝົດ (ລວມເຖິງໂຄງສ້າງຕ່າງໆ) ເຊິ່ງບໍລິສັດມີອຳນາດຄວບຄຸມກິດຈະການ. ບໍລິສັດຈະຄວບຄຸມເມື່ອມີການຖືກເປີດເຜີຍ ຫຼື ມີສິດທີ່ຈະປ່ຽນແປງຜົນຕອບແທນ. ບໍລິສັດໃນເຄືອແມ່ນຖືກສັງລວມເຂົ້າກັນຢ່າງຄົບຖ້ວນຕັ້ງແຕ່ມື້ທີ່ຖືກໂອນໃຫ້ບໍລິສັດໃນເອກະສານລາຍງານການເງິນສັງລວມ. ບັນດາບໍລິສັດໃນເຄືອແມ່ນຈະຖືກແຍກອອກຈາກກັນ ນັບຈາກມື້ທີ່ການຄວບຄຸມຢຸດເຊົາ.

ທຸລະກຳລະຫວ່າງບໍລິສັດ, ຍອດຄົງເຫຼືອ ແລະ ກຳໄລ ຫຼື ຂາດທຶນທີ່ບໍ່ໄດ້ຮັບຮູ້ໃນທຸລະກຳລະຫວ່າງບໍລິສັດ ແລະ ບໍລິສັດໃນເຄືອແມ່ນຈະຖືກລຶບລ້າງ. ບັນຊີລາຍຊື່ຂອງບໍລິສັດໃນເຄືອແມ່ນສະແດງຢູ່ໃນ (ບົດອະທິບາຍເລກທີ 7).

ໃນເອກະສານລາຍງານການເງິນແບບແຍກກິດຈະການ, ເງິນລົງທຶນໃນບໍລິສັດໃນເຄືອແມ່ນນຳໃຊ້ວິທີຄິດໄລ່ແບບມູນຄ່າຕົ້ນທຶນ.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

ໜີ້ຕ້ອງຮັບການຄ້າ ແລະ ເງິນແຮໜີ້ທວງຍາກ

ໜີ້ຕ້ອງຮັບການຄ້າ ແມ່ນສະແດງຕາມມູນຄ່າສຸດທິຂອງໜີ້ຕ້ອງຮັບການຄ້າທັງໝົດ ແລະ ເງິນແຮໜີ້ທວງຍາກ.

ບໍລິສັດມີນະໂຍບາຍເງິນແຮໜີ້ຕ້ອງຮັບທວງຍາກສຳລັບໜີ້ຕ້ອງຮັບການຄ້າ ໂດຍອີງຕາມຈຳນວນມື້ກາຍກຳນົດຂອງໜີ້ຕ້ອງຮັບການຄ້າດັ່ງລຸ່ມນີ້:

ໄລຍະເກີນກຳນົດ	*ອັດຕາເງິນແຮ*
6 ເດືອນ ຫາ 1 ປີ	30%
1 ປີ ຫາ 2 ປີ	50%
ຫຼາຍກວ່າ 2 ປີ	100%

ການເພີ່ມຂຶ້ນ ຫຼື ຫຼຸດລົງຂອງເງິນແຮໜີ້ທວງຍາກໄດ້ຖືກຮັບຮູ້ເປັນ "ລາຍຈ່າຍຈາກການດຳເນີນງານອື່ນໆ" ສຳລັບລາຍຈ່າຍເງິນແຮ ແລະ "ລາຍຮັບຈາກການດຳເນີນງານອື່ນໆ" ສຳລັບເກັບຄືນລ່າຍຈ່າຍເງິນແຮຢູ່ໃນໃບລາຍງານຜົນການດຳເນີນງານແບບແຍກກິດຈະການ.

ເງິນສົດ

ເງິນສົດປະກອບດ້ວຍເງິນສົດໃນຄັງ ແລະ ເງິນຝາກທະນາຄານ.

ຕົ້ນທຶນເງິນກູ້

ຕົ້ນທຶນເງິນກູ້ ປະກອບດ້ວຍດອກເບ້ຍ ແລະ ລາຍຈ່າຍອື່ນໆທີ່ເກີດຂຶ້ນ ທີ່ກ່ຽວຂ້ອງກັບການກູ້ຢືມເງິນທຶນ. ຕົ້ນທຶນເງິນກູ້ ແມ່ນຖືກບັນທຶກເປັນລາຍຈ່າຍພາຍໃນປີທີ່ລາຍຈ່າຍດັ່ງກ່າວເກີດຂຶ້ນ.

ໜີ້ຕ້ອງສົ່ງການຄ້າ, ລາຍຈ່າຍຄ້າງຈ່າຍ ແລະ ໜີ້ຕ້ອງສົ່ງອື່ນໆ

ໜີ້ຕ້ອງສົ່ງ ແລະ ລາຍຈ່າຍຄ້າງຈ່າຍ ຈະຖືກຮັບຮູ້ເປັນຈຳນວນທີ່ຕ້ອງຈ່າຍໃນອະນາຄົດ ສຳລັບສິນຄ້າ ແລະ ການບໍລິການທີ່ໄດ້ຮັບ, ບໍ່ວ່າໃບເກັບເງິນຈະຖືກສົ່ງ ຫຼື ຍັງບໍ່ສົ່ງໃຫ້ບໍລິສັດກໍ່ຕາມ.

ທຶນຈົດທະບຽນທີ່ຖອກແລ້ວ

ທຶນຈົດທະບຽນທີ່ຖອກແລ້ວ ຈະຖືກຮັບຮູ້ໃນໃບລາຍງານຖານະການເງິນແບບແຍກກິດຈະການເມື່ອໄດ້ຮັບເງິນຈາກຂາຮຸ້ນໃນກໍລະນີທີ່ຖອກທຶນຈົດທະບຽນເປັນເງິນສົດ ຫຼື ເມື່ອມີການອະນຸມັດຈາກຂາຮຸ້ນໃນກໍລະນີທີ່ບໍ່ແມ່ນເງິນສົດ ແລະ ໃບຢັ້ງຢືນຮຸ້ນຖືກອອກໃຫ້. ທຸກໆທຶນຈົດທະບຽນທີ່ຍັງບໍ່ທັນຖອກໂດຍອີງຕາມກົດລະບຽບຂອງບໍລິສັດ, ໃບທະບຽນວິສາຫະກິດ ແລະ ໃບທະບຽນອາກອນແມ່ນບໍ່ໄດ້ຖືກຮັບຮູ້ໃນໃບລາຍງານຖານະການເງິນແບບແຍກກິດຈະການ.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

ສ່ວນເພີ່ມມູນຄ່າຮຸ້ນ

ມູນຄ່າຮຸ້ນຖືກຮັບຮູ້ເວລາມີການອອກຮຸ້ນເພີ່ມ, ມະມູນຄ່າສ່ວນເກີນລະຫວ່າງລາຄາສະເໜີຂາຍຂອງຮຸ້ນທີ່ອອກເພີ່ມ ແລະ ມູນຄ່າໜ້າບັດ, ຫຼັງຈາກຫັກຕົ້ນທຶນຕ່າງໆທີ່ກ່ຽວຂ້ອງກັບການອອກຮຸ້ນ (ເຊັ່ນ: ຄ່າທຳນຽມການຄ້ຳປະກັນການອອກຮຸ້ນ ແລະ ລ່າຍຈ່າຍຕ່າງໆທີ່ກ່ຽວຂ້ອງໃນການຕີມູນຄ່າ, ລາຍຈ່າຍຄ່າທີ່ປຶກສາ).

ຄັງສຳຮອງ

ອີງຕາມກົດໝາຍວິສາຫະກິດ ເລກທີ 46/ສພຊ ລົງວັນທີ 20 ພະຈິກ 2023, ບໍລິສັດມະຫາຊົນຖືກຮຽກຮ້ອງໃຫ້ມີການຫັກກຳໄລສຸດທິຕາມຈຳນວນທີ່ເໝາະສົມເຂົ້າເປັນຄັງແຮຕາມລະບຽບການ.

ຄັງສຳຮອງຕາມລະບຽບການເປັນຄັງສຳຮອງເພື່ອຮັບປະກັນຄວາມສ່ຽງທີ່ຈະເກີດຂຶ້ນ, ເຊິ່ງແມ່ນສິບເປີເຊັນ (10%) ຂອງ ກຳໄລສຸດທິຈະຖືກຫັກເຂົ້າໃນຄັງສຳຮອງດັ່ງກ່າວ, ຫຼັງຈາກຫັກຂາດທຶນສະສົມ. ເມື່ອຄັງສຳຮອງດັ່ງກ່າວຫາກມີເງິນສະສົມໄດ້ ເຄິ່ງໜຶ່ງຂອງທຶນຈົດທະບຽນ, ບໍລິສັດ ອາດຈະໂຈະການຫັກກຳໄລເຂົ້າຄັງສຳຮອງດັ່ງກ່າວ, ເວັ້ນເສຍແຕ່ໄດ້ຮັບອະນຸມັດຈາກ ເຈົ້າຂອງບໍລິສັດ.

ຄັງສຳຮອງອື່ນໆປະກອບມີ ຄັງສຳຮອງສະຫວັດດີການ ແລະ ຄັງສຳຮອງເພື່ອຂະຫຍາຍອາຄານ ເຊິ່ງຫັກຈາກກຳໄລສະສົມ ຕາມຄວາມເໝາະສົມອີງຕາມກົດລະບຽບພາຍໃນຂອງບໍລິສັດ ລົງວັນທີ 15 ທັນວາ ປີ 1998. ຈຳນວນເງິນທີ່ເໝາະສົມຈະ ຖືກກຳນົດໂດຍສະພາບໍລິຫານຂອງບໍລິສັດໃນແຕ່ລະປີ.

ຄັງສຳຮອງຂອງປີການບັນຊີປະຈຸບັນຖືກຫັກຈາກກຳໄລສຸດທິຂອງປີຜ່ານມາຕາມການອະນຸມັດໃນກອງປະຊຸມຂາຮຸ້ນປະຈຳປີ.

ເງິນຕາຕ່າງປະເທດ

ເອກະສານລາຍງານເງິນແບບແຍກກິດຈະການ ຖືກລາຍງານເປັນສະກຸນເງິນກີບ ເຊິ່ງເປັນສະກຸນເງິນທີ່ບໍລິສັດໃຊ້ໃນ ການເຄື່ອນໄຫວ ແລະ ລາຍງານ. ບັນດາລາຍການເຄື່ອນໄຫວທີ່ເປັນສະກຸນເງິນອື່ນໆນອກເໜືອຈາກສະກຸນເງິນກີບ ແມ່ນຈະ ຖືກບັນທຶກໃນເບື້ອງຕົ້ນໂດຍໃຊ້ອັດຕາແລກປ່ຽນໃນມື້ທີ່ລາຍການເຄື່ອນໄຫວເກີດຂຶ້ນ. ຊັບສິນ ແລະ ໜີ້ສິນທາງການເງິນທີ່ ເປັນສະກຸນເງິນຕ່າງປະເທດແມ່ນຈະຖືກປ່ຽນເປັນເງິນກີບ ໂດຍນຳໃຊ້ອັດຕາແລກປ່ຽນໃນມື້ຂອງໃບລາຍງານຖານະການເງິນ ແບບແຍກກິດຈະການ. ກຳໄລ ແລະ ຂາດທຶນທັງ ໝົດຈະຖືກບັນທຶກເປັນລາຍຮັບທາງການເງິນ ແລະ ລາຍຈ່າຍທາງການ ເງິນຕາມລຳດັບໃນໃບລາຍງານຜົນການດຳເນີນງານແບບແຍກກິດຈະການ.

ການຮັບຮູ້ລາຍຮັບ

ລາຍຮັບຖືກຮັບຮູ້ ເມື່ອມີຄວາມເປັນໄປໄດ້ວ່າ ຜົນປະໂຫຍດທາງດ້ານເສດຖະກິດຈະໄດ້ຮັບໂດຍບໍລິສັດ ແລະ ລາຍຮັບ ດັ່ງກ່າວຕ້ອງສາມາດວັດແທກໄດ້ຢ່າງສົມເຫດສົມຜົນ. ລາຍຮັບຈະຖືກວັດແທກດ້ວຍມູນຄ່າຍຸຕິທຳຂອງລາຍຮັບ ຫຼື ໜີ້ຕ້ອງ ຮັບທີ່ຖືກພິຈາລະນາ, ໂດຍບໍ່ລວມສ່ວນຫຼຸດທາງການຄ້າ, ການສົ່ງຄືນ ແລະ ການຮັບສິນຄ້າຄືນ. ເງື່ອນໄຂສະເພາະໃນການຮັບ ຮູ້ ດັ່ງຕໍ່ໄປນີ້ຕ້ອງສອດຄ່ອງກ່ອນລາຍຮັບຈະຖືກຮັບຮູ້:

ການຂາຍສິນຄ້າ

ລາຍຮັບຖືກຮັບຮູ້ເມື່ອຄວາມສ່ຽງອັນເປັນສາລະສຳຄັນ ແລະ ຜົນຕອບແທນຂອງການເປັນເຈົ້າຂອງຕໍ່ສິນຄ້າໄດ້ຖືກໂອນຜ່ານ ໄປຍັງຜູ້ຊື້, ໂດຍທົ່ວໄປ ແມ່ນອີງຕາມການຂົນສົ່ງສິນຄ້າ.

3. **ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ** (ຕໍ່)

ການຮັບຮູ້ລາຍຮັບ (ຕໍ່)

ດອກເບ້ຍ

ລາຍຮັບຈະຖືກຮັບຮູ້ເມື່ອມີດອກເບ້ຍຄ້າງຮັບ (ໂດຍຄຳນຶງເຖິງຜົນຕອບແທນຂອງຊັບສິນ) ເວັ້ນເສຍແຕ່ວ່າມີຂໍ້ສົງໄສໃນການເກັບໜີ້.

ອາກອນ

ອາກອນກຳໄລ ແມ່ນການຄາດຄະເນໜີ້ຕ້ອງສົ່ງອາກອນ ຕາມກຳໄລທີ່ຕ້ອງເສຍອາກອນພາຍໃນປີ, ໂດຍນຳໃຊ້ອັດຕາອາກອນກຳໄລທີ່ປະກາດໃຊ້ນະມື້ຂອງໃບລາຍງານຖານະການເງິນແບບແຍກກິດຈະການ ແລະ ນຳໃຊ້ໃນໄລຍະຂອງການນຳໃຊ້ບົດລາຍງານ ແລະ ທຸກໆການດັດແກ້ຂອງໜີ້ຕ້ອງສົ່ງອາກອນກຳໄລຂອງປີທີ່ຜ່ານມາ.

ໜີ້ອາກອນຕ້ອງສົ່ງອື່ນໆ ປະກອບມີ ອາກອນມູນຄ່າເພີ່ມ ແລະ ອາກອນລາຍໄດ້ສ່ວນບຸກຄົນຂອງພະນັກງານ.

ອາກອນມູນຄ່າເພີ່ມແມ່ນໜີ້ສິນອາກອນທີ່ຕ້ອງຈ່າຍ ໂດຍກຳນົດຈາກລາຍຮັບສຳລັບໄລຍະທີ່ມີການຄິດໄລ່ ໂດຍນຳໃຊ້ອັດຕາອາກອນທີ່ເໝາະສົມພາຍໃນປີ.

ອາກອນລາຍໄດ້ສ່ວນບຸກຄົນ ແມ່ນອາກອນທີ່ຕ້ອງຈ່າຍໃນມູນຄ່າເງິນເດືອນທີ່ຈ່າຍໃຫ້ພະນັກງານຂອງໄລຍະດັ່ງກ່າວ ເຊິ່ງຄິດໄລ່ໂດຍນຳໃຊ້ອັດຕາອາກອນທີ່ເໝາະສົມພາຍໃນປີ.

ທຸກໆການດັດແກ້ທີ່ກ່ຽວກັບມູນຄ່າຂອງອາກອນຕ້ອງຈ່າຍຂອງປີທີ່ຜ່ານມາ ເຊິ່ງມີຜົນມາຈາກການໄລ່ລຽງອາກອນຂອງເຈົ້າໜ້າທີ່ສ່ວຍສາອາກອນແມ່ນໄດ້ບັນທຶກໂດຍກົງໃນກຳໄລສະສົມ.

ລາຍການເຄື່ອນໄຫວຂອງພາກສ່ວນທີ່ກ່ຽວຂ້ອງ

ຄູ່ສັນຍາຖືກພິຈາລະນາເປັນພາກສ່ວນທີ່ກ່ຽວຂ້ອງ ຖ້າຫາກວ່າ ພາກສ່ວນດັ່ງກ່າວມີຄວາມສາມາດໃນການຄວບຄຸມ ຫຼື ມີອິດທິພົນທີ່ສຳຄັນຕໍ່ກັນ ໃນການຕັດສິນໃຈທາງດ້ານການເງິນ ແລະ ການດຳເນີນງານ ຫຼື ຢູ່ພາຍໃຕ້ການຄວບຄຸມຮ່ວມກັນ ຫຼື ມີອິດທິພົນທີ່ສຳຄັນຮ່ວມກັນ.

ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງແມ່ນເກີດຂຶ້ນໂດຍອີງຕາມລາຄາຕະຫຼາດ ຫຼື ໃນກໍລະນີທີ່ບໍ່ມີລາຄາຕະຫຼາດໃນລາຄາທີ່ຕົກລົງຕາມສັນຍາ.

ລາຍຈ່າຍຈາກການດຳເນີນງານອື່ນໆ

ລາຍຈ່າຍທີ່ກ່ຽວຂ້ອງກັບໂຮງງານທີ່ຢຸດຊົ່ວຄາວຈະຮັບຮູ້ເປັນຄ່າໃຊ້ຈ່າຍໃນການດຳເນີນງານອື່ນ.

3. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

ຂໍ້ມູນຕາມສ່ວນງານ

ສ່ວນງານເປັນອົງປະກອບທີ່ກຳນົດແຍກອອກຕ່າງຫາກໂດຍບໍລິສັດເຊິ່ງປະກອບທຸລະກິດການສະໜອງສິນຄ້າ ຫຼື ການບໍລິການທີ່ກ່ຽວຂ້ອງ (ສ່ວນທຸລະກິດ) ຫຼື ການສະໜອງສິນຄ້າ ຫຼື ການບໍລິການໃນສະພາບແວດລ້ອມທາງເສດຖະກິດສະເພາະ (ສ່ວນງານທາງພູມສາດ), ທີ່ມີຄວາມສ່ຽງ ແລະ ຜົນຕອບແທນທີ່ແຕກຕ່າງໄປຈາກນັ້ນຂອງສ່ວນອື່ນໆ.

ກິດຈະກຳຫຼັກຂອງບໍລິສັດຕາມໃບອະນຸຍາດດຳເນີນທຸລະກິດ ແມ່ນໃຫ້ການບໍລິການທາງດ້ານການທ່ອງທ່ຽວ (ຂາເຂົ້າ – ຂາອອກ) ແລະ ການກໍ່ສ້າງຄອນໂດມີນຽມສຳລັບການຂາຍ. ນອກຈາກນັ້ນ, ກິດຈະກຳເຫຼົ່ານີ້ແມ່ນດຳເນີນຢູ່ໃນ ສປປ ລາວ ເທົ່ານັ້ນ. ດັ່ງນັ້ນ, ຄວາມສ່ຽງ ແລະ ຜົນຕອບແທນຂອງບໍລິສັດຈຶ່ງບໍ່ໄດ້ຮັບຜົນກະທົບຈາກການບໍລິການຂອງບໍລິສັດທີ່ບໍລິສັດສະໜອງ ຫຼື ສະຖານທີ່ທີ່ບໍລິສັດດຳເນີນທຸລະກິດ. ດັ່ງນັ້ນ, ການຄຸ້ມຄອງຂອງບໍລິສັດແມ່ນຖືວ່າມີພຽງແຕ່ສ່ວນດຽວສຳລັບສ່ວນທຸລະກິດ ແລະ ສ່ວນພູມສາດ ແລະ ດັ່ງນັ້ນຈຶ່ງບໍ່ຈຳເປັນຕ້ອງນຳສະເໜີຂໍ້ມູນຕາມສ່ວນງານ.

4. ຊັບສິນ, ອາຄານ ແລະ ອຸປະກອນ

	ອາຄານ ແລະ ສິ່ງປຸກສ້າງ ກີບ	*ພາຫະນະຂົນສົ່ງ ກີບ*	*ການປັບປຸງສິດທິໃນການເຊົ່າ ກີບ*	*ເຄື່ອງໃຊ້ຫ້ອງການ ກີບ*	*ລວມ ກີບ*
ຕົ້ນທຶນ					
ນະວັນທີ 1 ມັງກອນ 2025	134,382,315,687	11,020,750,831	29,165,303	762,174,746	146,194,406,567
ຊື້ເຂົ້າເພີ່ມ	-	-	-	107,577,381	107,577,381
ສະສາງອອກ	(210,646,794)	-	-	-	(210,646,794)
ນະວັນທີ 31 ທັນວາ 2025	134,171,668,893	11,020,750,831	29,165,303	869,752,127	146,091,337,154
ຄ່າຫຼ້ຍຫ້ຽນສະສົມ					
ນະວັນທີ 1 ມັງກອນ 2025	134,382,315,687	10,340,420,089	17,258,720	691,415,175	145,431,409,671
ຫັກຄ່າຫຼ້ຍຫ້ຽນພາຍໃນປີ	-	361,830,859	2,597,800	9,106,796	373,535,455
ສະສາງອອກ	(210,646,794)	-	-	-	(210,646,794)
ນະວັນທີ 31 ທັນວາ 2025	134,171,668,893	10,702,250,948	19,856,520	700,521,971	145,594,298,332
ມູນຄ່າສຸດທິຕາມປັ້ມຊີ					
ນະວັນທີ 1 ມັງກອນ 2025	-	680,330,742	11,906,583	70,759,571	762,996,896
ນະວັນທີ 31 ທັນວາ 2025	-	318,499,883	9,308,783	169,230,156	497,038,822

5. ຊັບສິນບັດຄົງທີ່ບໍ່ມີຕົວຕົນ

	ຊອບແວ	*ສິດນຳໃຊ້ທີ່ດິນ ທີ່ບໍ່ມີກຳນົດ*	*ລວມ*
	ກີບ	*ກີບ*	*ກີບ*
ຕົ້ນທຶນ			
ນະວັນທີ 1 ມັງກອນ 2025	38,139,600	3,655,353,775	3,693,493,375
ຊື້ເຂົ້າເພີ່ມ	62,224,589	-	62,224,589
ນະວັນທີ 31 ທັນວາ 2025	100,364,189	3,655,353,775	3,755,717,964
ຄ່າຫຼຸ້ຍຫ້ຽນສະສົມ			
ນະວັນທີ 1 ມັງກອນ 2025	12,077,540	-	12,077,540
ຫັກຄ່າຫຼຸ້ຍຫ້ຽນພາຍໃນປີ	7,627,920	-	7,627,920
ນະວັນທີ 31 ທັນວາ 2025	19,705,460	-	19,705,460
ມູນຄ່າສຸດທິຕາມບັນຊີ			
ນະວັນທີ 1 ມັງກອນ 2025	26,062,060	3,655,353,775	3,681,415,835
ນະວັນທີ 31 ທັນວາ 2025	80,658,729	3,655,353,775	3,736,012,504

6. ຊັບສິນພວມກໍ່ສ້າງ

	31 ທັນວາ 2025	*31 ທັນວາ 2024*
	ກີບ	*ກີບ*
ໂຄງການຂຸດຄົ້ນບໍ່ແຮ່ ຄອນພຸກ	5,966,361,212	5,966,361,212
ໂຄງການຕຶກ 21 (*)	11,796,561,853	28,447,998,304
ໂຄງການກໍ່ສ້າງເຮືອນພັກ	5,780,882,242	2,094,090,295
ໂຄງການກໍ່ສ້າງໝອງບອນ	52,484,784	52,484,784
ໂຄງການກໍ່ສ້າງລີສອດ-ໂຮງແຮມ	42,118,600	42,118,600
ໂຄງການກໍ່ສ້າງຫ້ອງການບໍ່ແຮ່	36,918,048	36,918,048
ໂຄງການວັງວຽງ	423,292,224	-
	24,098,618,963	**36,639,971,243**
ເງິນແຮສຳລັບຊັບສິນພວມກໍ່ສ້າງ	(5,966,361,212)	(5,966,361,212)
	18,132,257,751	**30,673,610,031**

(*) ການນຳສະເໜີນີ້ແມ່ນສຳລັບຄ່າໃຊ້ຈ່າຍໃນການກໍ່ສ້າງທີ່ກ່ຽວຂ້ອງກັບການພັດທະນາອາຄານຄອນໂດມິນຽມ ("ຕຶກ 21") ທີ່ຕັ້ງຢູ່ບ້ານໂພນພະເນົາ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ.

7. ການລົງທຶນໃນບໍລິສັດໃນເຄືອ

ທຶນທີ່ປະກອບສ່ວນ ແລະ ອັດຕາສ່ວນການຖືຄອງໃນບໍລິສັດໃນເຄືອມີດັ່ງຕໍ່ໄປນີ້:

		ຈຳນວນເງິນລົງທຶນ	
		31 ທັນວາ 2025	*31 ທັນວາ 2024*
		ກີບ	*ກີບ*
ບໍລິສັດໃນເຄືອ			
ບໍລິສັດ ພັດທະນາກະສິກຳ ວິທະຍາສາດ ແລະ ເຕັກໂນໂລຊີ ລາວ ຈຳກັດຜູ້ດຽວ	(i)	558,564,000	558,564,000
ບໍລິສັດ ກໍ່ສ້າງ ພັດທະນາ ຕິວເມືອງລາວ ຈຳກັດຜູ້ດຽວ	(ii)	5,060,888,057	4,644,993,146
ບໍລິສັດ ສະຖາບັນແຜນການ ແລະ ການອອກແບບທ່ອງທ່ຽວແຫ່ງຊາດລາວ ຈຳກັດຜູ້ດຽວ	(iii)	229,612,000	-
ບໍລິສັດ ວັດສະດຸກໍ່ສ້າງໃໝ່ລາວ ຈຳກັດຜູ້ດຽວ	(iv)	-	-
ບໍລິສັດ ບໍລິການວາງສະແດງສາກົນລາວ ຈຳກັດຜູ້ດຽວ	(v)	-	-
ບໍລິສັດ ພັດທະນາ ຊັບພະຍາກອນບໍ່ແຮ່ລາວ ຈຳກັດຜູ້ດຽວ	(vi)	-	-
ບໍລິສັດ ສະຖາບັນສຳຫຼວດ ແລະ ອອກແບບແຫ່ງຊາດລາວ ຈຳກັດຜູ້ດຽວ	(vii)	-	-
ບໍລິສັດ ສູນຝຶກອົບຮົມ ແລະ ການສຶກສາ (ລາວ) ຈຳກັດຜູ້ດຽວ	(viii)		
ບໍລິສັດ ເຄື່ອງຈັກ ແລະ ອຸປະກອນວິສະວະກຳ ຈຳກັດຜູ້ດຽວ	(ix)	-	-
		5,849,064,057	**5,203,557,146**

(i) ໃນວັນທີ 14 ມີນາ 2023, ບໍລິສັດໄດ້ສ້າງຕັ້ງບໍລິສັດ Zhongke Herb (Lao) Sole Co., Ltd, ເຊິ່ງເປັນບໍລິສັດທີ່ຈົດທະບຽນຢູ່ໃນ ສປປ ລາວ, ດ້ວຍທຶນຈົດທະບຽນ 1,000 ລ້ານກີບ. ກິດຈະກຳຫຼັກຂອງ Zhongke Herb (Lao) Sole Co., Ltd ແມ່ນການປູກ ແລະ ນຳເຂົ້າພືດສະໝຸນໄພ. ໃນວັນທີ 17 ມິຖຸນາ 2024, ບໍລິສັດໄດ້ປ່ຽນຊື່ເປັນ ບໍລິສັດ Lao Agriculture Science and Technology Development Sole Co., Ltd. ໃບອະນຸຍາດທຸລະກິດເລກທີ 2118/ຈທອ, ລົງວັນທີ 17 ມິຖຸນາ 2024, ໄດ້ອອກໂດຍກະຊວງອຸດສາຫະກຳ ແລະ ການຄ້າ. ກິດຈະກຳຫຼັກຂອງ ບໍລິສັດແມ່ນການຊື້ສະໝຸນໄພເພື່ອສົ່ງອອກ ແລະ ການປຸງກສະໝຸນໄພເພື່ອຂາຍພາຍໃນ ແລະ ສົ່ງອອກ. ມາຮອດວັນທີ ຂອງເອກະສານລາຍງານການເງິນແບບແຍກກິດຈະການເຫຼົ່ານີ້, ບໍລິສັດຍັງບໍ່ທັນສຳເລັດໃນການປະກອບສ່ວນທຶນເຂົ້າ ໃນບໍລິສັດນີ້.

(ii) ໃນວັນທີ 14 ມິຖຸນາ 2023, ບໍລິສັດໄດ້ສ້າງຕັ້ງບໍລິສັດ Lao City Construction Development Sole Co., Ltd, ເຊິ່ງເປັນບໍລິສັດທີ່ຈົດທະບຽນຢູ່ໃນ ສປປ ລາວ, ດ້ວຍທຶນຈົດທະບຽນ 5,000 ລ້ານກີບ. ກິດຈະກຳຫຼັກຂອງບໍລິສັດ Lao City Construction Development Sole Co., Ltd ແມ່ນການໃຫ້ບໍລິການກໍ່ສ້າງ. ໃນວັນທີ 5 ກໍລະກົດ 2024, ບໍລິສັດໄດ້ປ່ຽນຊື່ເປັນ Lao City Construction Development Group Sole Co., Ltd. ບໍລິສັດມີແຜນທີ່ຈະສ້າງຕັ້ງ ໂຮງງານຜະລິດເຟີນິເຈີເພື່ອຂາຍພາຍໃນປະເທດ ແລະ ສົ່ງອອກ, ແລະ ເພື່ອດຳເນີນການສຳຫຼວດ, ການອອກແບບ, ແລະ ການກໍ່ສ້າງອາຄານ, ກິດຈະກຳອະສັງຫາລິມະສັບ, ການໃຫ້ບໍລິການຄຸ້ມຄອງແກ່ໜ່ວຍງານອື່ນໆ, ແລະ ການສະໜອງບໍລິການໃຫ້ຄຳປຶກສາດ້ານການກໍ່ສ້າງ.

7. ການລົງທຶນໃນບໍລິສັດໃນເຄືອ (ຕໍ່)

(iii) ໃນວັນທີ 12 ຕຸລາ 2024, ບໍລິສັດໄດ້ສ້າງຕັ້ງສະຖາປັນວາງແຜນ ແລະ ອອກແບບການທ່ອງທ່ຽວແຫ່ງຊາດລາວ ບໍລິສັດ ຈຳກັດຜູ້ດຽວ, ເຊິ່ງເປັນບໍລິສັດທີ່ຈົດທະບຽນຢູ່ໃນ ສປປ ລາວ, ເຊິ່ງ LCTC ຖືຫຸ້ນ 100%. ທຶນຈົດທະບຽນຂອງ ບໍລິສັດແມ່ນ 2,000,000,000 ກີບ ຕາມໃບອະນຸຍາດທຸລະກິດເລກທີ 3113/ຈທວ ລົງວັນທີ 12 ຕຸລາ 2024 ທີ່ອອກ ໂດຍກະຊວງອຸດສາຫະກຳ ແລະ ການຄ້າ. ກິດຈະກຳຫຼັກຂອງບໍລິສັດນີ້ແມ່ນການວາງແຜນ ແລະ ອອກແບບ ການທ່ອງທ່ຽວ. ມາຮອດວັນທີຂອງເອກະສານລາຍງານການເງິນແບບແຍກກິດຈະການເຫຼົ່ານີ້, ບໍລິສັດຍັງບໍ່ທັນສຳເລັດ ໃນການປະກອບສ່ວນທຶນເຂົ້າໃນບໍລິສັດນີ້.

(iv) ໃນວັນທີ 10 ສິງຫາ 2023, ບໍລິສັດໄດ້ສ້າງຕັ້ງບໍລິສັດ Lao New Building Materials Sole Co., Ltd, ເຊິ່ງເປັນ ບໍລິສັດທີ່ຈົດທະບຽນຢູ່ໃນ ສປປ ລາວ, ເຊິ່ງ LCTC ຖືຫຸ້ນ 100%. ທຶນຈົດທະບຽນຂອງບໍລິສັດແມ່ນ 20,000 ລ້ານ ກີບ ຕາມໃບອະນຸຍາດທຸລະກິດເລກທີ 2422/ຈທວ ລົງວັນທີ 10 ສິງຫາ 2023 ທີ່ອອກໂດຍກະຊວງອຸດສາຫະກຳ ແລະ ການຄ້າ. ກິດຈະກຳຫຼັກຂອງບໍລິສັດແມ່ນການນຳເຂົ້າວັດສະດຸ ແລະ ອຸປະກອນກໍ່ສ້າງທຸກປະເພດ, ພ້ອມທັງເຄື່ອງ ຈັກກໍ່ສ້າງເພື່ອຈຳໜ່າຍພາຍໃນປະເທດ. ບໍລິສັດຍັງປະສານງານກັບກົມການຄ້າພາຍໃນ, ກະຊວງອຸດສາຫະກຳ ແລະ ການຄ້າ, ເພື່ອຂໍໃບອະນຸຍາດດຳເນີນທຸລະກິດທີ່ຕ້ອງການ. ມາຮອດວັນທີຂອງເອກະສານລາຍງານການເງິນແບບແຍກ ກິດຈະການເຫຼົ່ານີ້, ບໍລິສັດຍັງບໍ່ທັນສຳເລັດໃນການປະກອບສ່ວນທຶນເຂົ້າໃນບໍລິສັດນີ້.

(v) ໃນວັນທີ 1 ກຸມພາ 2024, ບໍລິສັດໄດ້ສ້າງຕັ້ງບໍລິສັດ ບໍລິການວາງສະແດງສາກົນລາວ ຈຳກັດຜູ້ດຽວ ເປັນບໍລິສັດທີ່ຕັ້ງຢູ່ ໃນ ສປປ ລາວ ເຊິ່ງບໍລິສັດ LCTC ມີກຳມະສິດເປັນເຈົ້າຂອງ 100% ດ້ວຍທຶນຈົດທະບຽນ 500 ລ້ານກີບ. ໃບ ທະບຽນວິສາຫະກິດເລກທີ 0414/ຈທວ ລົງວັນທີ 01 ກຸມພາ 2024 ອອກໂດຍກະຊວງອຸດສາຫະກຳ ແລະ ການຄ້າ. ກິດຈະກຳຫຼັກຂອງບໍລິສັດ ແມ່ນການຜະລິດສິ່ງບັນເທີງ, ຮູບເງົາ ແລະ ການໂຄສະນາ. ມາຮອດວັນທີຂອງເອກະສານລາຍ ງານການເງິນແບບແຍກກິດຈະການເຫຼົ່ານີ້, ບໍລິສັດຍັງບໍ່ທັນສຳເລັດໃນການປະກອບສ່ວນທຶນເຂົ້າໃນບໍລິສັດນີ້.

(vi) ໃນວັນທີ 29 ກຸມພາ 2024, ບໍລິສັດໄດ້ສ້າງຕັ້ງບໍລິສັດພັດທະນາຊັບພະຍາກອນແຮ່ທາດລາວ ຈຳກັດ, ເຊິ່ງເປັນບໍລິສັດທີ່ ຈົດທະບຽນຢູ່ໃນ ສປປ ລາວ, ເຊິ່ງ LCTC ຖືຫຸ້ນ 100%. ທຶນຈົດທະບຽນຂອງບໍລິສັດແມ່ນ 500 ລ້ານກີບ ຕາມໃບ ອະນຸຍາດທຸລະກິດເລກທີ 0767/ຈທວ ລົງວັນທີ 29 ກຸມພາ 2024, ອອກໂດຍກະຊວງອຸດສາຫະກຳ ແລະ ການຄ້າ. ກິດຈະກຳຫຼັກຂອງບໍລິສັດນີ້ແມ່ນການສຳຫຼວດ ແລະ ສຳຫຼວດສະຖານທີ່ຂຸດຄົ້ນບໍ່ແຮ່, ແລະ ການປະສານງານກັບ ກະຊວງອຸດສາຫະກຳ ແລະ ການຄ້າ (ເມື່ອກ່ອນເອີ້ນວ່າ ກະຊວງພະລັງງານ ແລະ ບໍ່ແຮ່) ສຳລັບການດຳເນີນການ ເອກະສານທາງກົດໝາຍ. ມາຮອດວັນທີຂອງເອກະສານລາຍງານການເງິນແບບແຍກກິດຈະການເຫຼົ່ານີ້, ບໍລິສັດຍັງບໍ່ ທັນສຳເລັດໃນການປະກອບສ່ວນທຶນເຂົ້າໃນບໍລິສັດນີ້.

(vii) ໃນວັນທີ 6 ພຶດສະພາ 2024, ບໍລິສັດໄດ້ສ້າງຕັ້ງບໍລິສັດ Laos National Survey and Design Institute Sole Co., Ltd, ເຊິ່ງເປັນບໍລິສັດທີ່ຈົດທະບຽນຢູ່ໃນ ສປປ ລາວ, ເຊິ່ງ LCTC ຖືຫຸ້ນ 100%. ທຶນຈົດທະບຽນຂອງບໍລິສັດແມ່ນ 10,000 ລ້ານກີບ ຕາມໃບອະນຸຍາດທຸລະກິດເລກທີ 1495/ຈທວ ລົງວັນທີ 6 ພຶດສະພາ 2024, ອອກໂດຍກະຊວງອຸດ ສາຫະກຳ ແລະ ການຄ້າ. ກິດຈະກຳຫຼັກຂອງບໍລິສັດນີ້ແມ່ນການສຳຫລວດ, ການສຳຫຼວດ ແລະ ການອອກແບບ ອາຄານ. ມາຮອດວັນທີຂອງເອກະສານລາຍງານການເງິນແບບແຍກກິດຈະການເຫຼົ່ານີ້, ບໍລິສັດຍັງບໍ່ທັນສຳເລັດໃນການ ປະກອບສ່ວນທຶນເຂົ້າໃນບໍລິສັດນີ້.

7. ການລົງທຶນໃນບໍລິສັດໃນເຄືອ (ຕໍ່)

(viii) ໃນວັນທີ 6 ພຶດສະພາ 2024, ບໍລິສັດໄດ້ສ້າງຕັ້ງບໍລິສັດສູນການສຶກສາ ແລະ ຝຶກອົບຮົມລາວ ຈຳກັດຜູ້ດຽວ, ເຊິ່ງເປັນບໍລິສັດທີ່ຈົດທະບຽນຢູ່ໃນ ສປປ ລາວ, ເຊິ່ງ LCTC ຖືຫຸ້ນ 100%. ທຶນຈົດທະບຽນຂອງບໍລິສັດແມ່ນ 1,000 ລ້ານກີບ ຕາມໃບອະນຸຍາດທຸລະກິດເລກທີ 1485/ຈຫວ ລົງວັນທີ 6 ພຶດສະພາ 2024, ອອກໂດຍກະຊວງອຸດສາຫະກຳ ແລະ ການຄ້າ. ກິດຈະກຳຫຼັກຂອງບໍລິສັດນີ້ແມ່ນການໃຫ້ບໍລິການໃຫ້ຄຳປຶກສາດ້ານການສຶກສາ. ມາຮອດວັນທີຂອງເອກະສານລາຍງານການເງິນແບບແຍກກິດຈະການເຫຼົ່ານີ້, ບໍລິສັດຍັງບໍ່ທັນສຳເລັດໃນການປະກອບສ່ວນທຶນເຂົ້າໃນບໍລິສັດນີ້.

(ix) ໃນວັນທີ 22 ພຶດສະພາ 2025, ບໍລິສັດໄດ້ສ້າງຕັ້ງ ບໍລິສັດ ອຸປະກອນເຄື່ອງຈັກວິສະວະກຳ ຈຳກັດ, ເຊິ່ງເປັນບໍລິສັດທີ່ຈົດທະບຽນຢູ່ໃນ ສປປ ລາວ, ເຊິ່ງບໍລິສັດ LCTC ຖືຫຸ້ນ 100%. ທຶນຈົດທະບຽນຂອງບໍລິສັດແມ່ນ 20,000 ລ້ານກີບ ຕາມໃບອະນຸຍາດທຸລະກິດເລກທີ 016090/ຈຫວ ລົງວັນທີ 22 ພຶດສະພາ 2025, ອອກໂດຍກະຊວງອຸດສາຫະກຳ ແລະ ການຄ້າ. ກິດຈະກຳຫຼັກຂອງບໍລິສັດນີ້ແມ່ນການໃຫ້ບໍລິການເຊົ່າເຄື່ອງຈັກ ແລະ ອຸປະກອນສຳລັບວຽກງານກໍ່ສ້າງ, ການບໍລິການໃຫ້ຄຳປຶກສາດ້ານການກໍ່ສ້າງ, ການບໍລິການໃຫ້ຄຳປຶກສາດ້ານການກໍ່ສ້າງສາງ, ການບໍລິການສ້ອມແປງເຄື່ອງຈັກກໍ່ສ້າງ, ແລະ ການຈຳໜ່າຍເຄື່ອງຈັກ ແລະ ອຸປະກອນສຳລັບກິດຈະກຳກໍ່ສ້າງ. ມາຮອດວັນທີຂອງເອກະສານລາຍງານການເງິນແບບແຍກກິດຈະການເຫຼົ່ານີ້, ບໍລິສັດຍັງບໍ່ທັນສຳເລັດໃນການປະກອບສ່ວນທຶນເຂົ້າໃນບໍລິສັດນີ້.

8. ຊັບສິນໝຸນວຽນອື່ນໆ

	31 ທັນວາ 2025	*31 ທັນວາ 2024*
	ກີບ	*ກີບ*
ເງິນລ່ວງໜ້າໃຫ້ພະນັກງານ	377,905,697	1,326,489,099
ເງິນຄ้ำປะกันล่วงหน้า (*)	2,155,450,000	2,167,000,000
ອື່ນໆ	4,028,219,793	829,287,449
	6,561,575,490	**4,322,776,548**

(*) ເງິນຄ้ำປะกันล่วงหน้านี้แม่นเป็นเงินค้ำประกันที่มอบให้ บໍລິສັດ ลัดพัดทะนาชุมนะบด เพื่อจุดประสงค์ในโครงการสำหวด ແລະ ขุดค้นบ่แร่ ยู่แขวงหัวพัน ອิงตามบันทึกความเข้าใจ สะบับเลกที่ 224 ลิงวันที่ 26 มีนา 2024.

9. ເຄື່ອງໃຊສາງ

	31 ທັນວາ 2025	*31 ທັນວາ 2024*
	ກີບ	*ກີບ*
ວັດຖຸດິບ ແລະ ວັດຖຸສິ້ນເປືອງ	1,141,617,691	1,148,766,633
ອຸປະກອນ ແລະ ເຄື່ອງມື	3,828,061,512	5,201,697,528
ສິນຄ້າພວມຜະລິດ	9,139,216,605	9,139,216,605
ສິນຄ້າສຳເລັດຮູບ	773,052,367	773,052,367
ຊັບສິນພວມກໍ່ສ້າງໂຄງການຕຶກ 21 (*)	70,779,371,117	7,105,923,367
ໂຄງການເຄື່ອງຈັກ, ອາໄຫ່ ແລະ ຕະຫຼາດກະສິກຳ	2,906,535,068	-
	88,567,854,306	**23,368,656,500**
ເງິນແຮສຳລັບເຄື່ອງໃຊສາງ	(13,880,297,555)	(11,044,644,047)
	74,687,556,805	**12,324,012,453**

(*) ການນຳສະເໜີນີ້ແມ່ນສຳລັບຄ່າໃຊ້ຈ່າຍໃນການພັດທະນາອາພາດເມັນສຳລັບຂາຍໃນອາຄານຄອນໂດມິນຽມ ("ອາຄານ 21") ຕັ້ງຢູ່ບ້ານໂພນພະເນົາ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ ຕັ້ງແຕ່ຊັ້ນທີ 4 ຫາຊັ້ນທີ 21.

10. ໜີ້ຕ້ອງຮັບທາງການຄ້າ

	31 ທັນວາ 2025	*31 ທັນວາ 2024*
	ກີບ	*ກີບ*
ໜີ້ຕ້ອງຮັບທາງການຄ້າ	392,289,331	2,050,315,747
ເງິນແຮສຳລັບໜີ້ຕ້ອງຮັບທ່ວງຍາກ	(356,267,757)	(394,203,957)
	36,021,574	**1,656,111,790**

ລາຍລະອຽດຂອງເງິນແຮສຳລັບໜີ້ຕ້ອງຮັບທ່ວງຍາກ ນະວັນທີ 31 ທັນວາ 2025 ມີດັ່ງນີ້:

ສະຖານະເກີນກຳນົດ	*ຍອດເຫຼືອໜີ້ຕ້ອງຮັບ*	*ເງິນແຮ*
ເກີນກຳນົດຊຳລະ 6 ເດືອນ ຫາ 1 ປີ	-	-
ເກີນກຳນົດຊຳລະ ຈາກ 1 ປີ ຫາ 2 ປີ	-	-
ເກີນກຳນົດຊຳລະຫຼາຍກວ່າ 2 ປີ	(356,267,757)	(356,267,757)
ລວມ	**(356,267,757)**	**(356,267,757)**

ລາຍລະອຽດຂອງເງິນແຮສຳລັບໜີ້ຕ້ອງຮັບທ່ວງຍາກ ນະວັນທີ 31 ທັນວາ 2024 ມີດັ່ງນີ້:

ສະຖານະເກີນກຳນົດ	*ຍອດເຫຼືອໜີ້ຕ້ອງຮັບ*	*ເງິນແຮ*
ເກີນກຳນົດຊຳລະ 6 ເດືອນ ຫາ 1 ປີ	-	-
ເກີນກຳນົດຊຳລະ ຈາກ 1 ປີ ຫາ 2 ປີ	-	-
ເກີນກຳນົດຊຳລະຫຼາຍກວ່າ 2 ປີ	(394,203,957)	(394,203,957)
ລວມ	**(394,203,957)**	**(394,203,957)**

11. ເງິນສົດ

	31 ທັນວາ 2025	*31 ທັນວາ 2024*
	ກີບ	*ກີບ*
ເງິນສົດໃນຄັງ	33,707,451	20,203,147
ເງິນຝາກທະນາຄານ	683,211,010	554,794,511
	716,918,461	**574,997,658**

12. ໜີ້ຕ້ອງສົ່ງທາງການຄ້າ

	31 ທັນວາ 2025	*31 ທັນວາ 2024*
	ກີບ	*ກີບ*
ໜີ້ຕ້ອງສົ່ງທາງການຄ້າຈາກຜູ້ສະໜອງ	5,988,072,720	6,411,332,856
ບໍລິສັດ ອ້ົງ ຄອນກິດ	*4,605,894,972*	*5,653,183,546*
ອື່ນໆ	*1,382,177,748*	*758,149,310*
ຄ່າທຳນຽມກວດສອບ	497,908,950	1,614,415,000
	6,485,981,670	**8,025,747,856**

13. ເງິນລ່ວງໜ້າຈາກລູກຄ້າ

	31 ທັນວາ 2025	*31 ທັນວາ 2024*
	ກີບ	*ກີບ*
ເງິນລ່ວງໜ້າຈາກຜູ້ຊື້ຕາມສັນຍາສະສາງຊັບສິນ	4,571,690,000	8,015,587,600
ເງິນລ່ວງໜ້າສຳລັບຈອງຄອນໂດມິນຽມຈາກລູກຄ້າ	3,288,694,134	4,405,220,089
ເງິນລ່ວງໜ້າສຳລັບໂຄງການຕະຫລາດຂາຍເຄື່ອງກິນຈັກ-ອາ ໄຫ່ ແລະ ກຳສິກຳ	16,165,875,000	
ເງິນລ່ວງໜ້າອື່ນໆຈາກລູກຄ້າ	20,000,000	20,000,000
	24,046,259,134	**12,440,807,689**

14. ພັນທະອາກອນ

	31 ທັນວາ 2025	*31 ທັນວາ 2024*
	ກີບ	*ກີບ*
ອາກອນຕ້ອງສົ່ງຈາກຜູ້ສະໜອງຕ່າງປະເທດ	3,058,050,486	3,058,050,486
ອາກອນມູນຄ່າເພີ່ມສິ້ນອອກ	2,967,343,443	2,919,472,079
ໜີ້ຕ້ອງສົ່ງອາກອນກຳໄລ (ບົດອະທິບາຍເລກທີ 21)	479,656,526	479,656,526
ອາກອນອື່ນໆ	2,663,527,903	1,695,492,559
	9,168,578,357	**8,152,671,650**

15. ໜີ້ຕ້ອງສິ່ງອື່ນໆ

	31 ທັນວາ 2025	*31 ທັນວາ 2024*
	ກີບ	*ກີບ*
ໜີ້ຕ້ອງສິ່ງເງິນປັນຜົນໃຫ້ພາກສ່ວນກ່ຽວຂ້ອງ (ບົດອະທິບາຍເລກທີ 22) (*)	13,581,363,960	13,581,363,960
ເງິນກູ້ຢືມຈາກພາກສ່ວນກ່ຽວຂ້ອງ (ບົດອະທິບາຍເລກທີ 22)	20,790,748,039	10,617,524,810
ໜີ້ຕ້ອງສິ່ງປະກັນສັງຄົມ	38,004,781	26,403,581
ເງິນກູ້ຢືມ Laos Yao Xing Shun Industrial Sole Co., Ltd (**)	48,649,552,505	-
ອື່ນໆ	835,903,551	457,403,351
	83,895,572,835	**24,682,695,701**

(*) ລາຍລະອຽດຂອງການຈ່າຍເງິນປັນຜົນໃຫ້ກັບພາກສ່ວນກ່ຽວຂ້ອງມີດັ່ງນີ້:

	31 ທັນວາ 2025	*31 ທັນວາ 2024*
	ກີບ	*ກີບ*
ໜີ້ຕ້ອງສິ່ງເງິນປັນຜົນໃຫ້ກັບພາກສ່ວນກ່ຽວຂ້ອງ ປະຈຳປີ 2016	3,395,146,565	3,395,146,565
ໜີ້ຕ້ອງສິ່ງເງິນປັນຜົນໃຫ້ກັບພາກສ່ວນກ່ຽວຂ້ອງ ປະຈຳປີ 2015	5,773,056,205	5,773,056,205
ໜີ້ຕ້ອງສິ່ງເງິນປັນຜົນໃຫ້ກັບພາກສ່ວນກ່ຽວຂ້ອງ ປະຈຳປີ 2014	4,413,161,190	4,413,161,190
	13,581,363,960	**13,581,363,960**

(**) ຈຳນວນເງິນນີ້ສະແດງເຖິງເງິນກູ້ທີ່ບໍ່ມີດອກເບ້ຍຈາກບໍລິສັດ Laos Yao Xing Industrial Sole Co., Ltd., ທີ່ກ່ຽວຂ້ອງກັບການກໍ່ສ້າງອາຄານ 21 ຕາມສັນຍາເລກທີ LCTC E25011. ຕາມຂໍ້ຕົກລົງນີ້ເມື່ອໂຄງການອາຄານ 21 ບັນລຸໄດ້ 95% ຂອງພື້ນທີ່ທີ່ຂາຍໄດ້, ຫຼື ຫຼັງຈາກສາມປີນັບຈາກວັນເລີ່ມຕົ້ນຂອງສັນຍາ (ແລ້ວແຕ່ກໍລະນີໃດທີ່ເກີດຂຶ້ນກ່ອນ), ສ່ວນໃດສ່ວນໜຶ່ງຂອງຈຳນວນເງິນທີ່ຍັງບໍ່ທັນໄດ້ຊຳລະຈະຖືກຈັດປະເພດໃໝ່ໂດຍອັດຕະໂນມັດເປັນການກູ້ຢືມທີ່ມີດອກເບ້ຍ.

16. ທຶນຈົດທະບຽນທີ່ໄດ້ຖອກແລ້ວ

16.1 ຮຸ້ນ

	31 ທັນວາ 2025		*31 ທັນວາ 2024*	
	ຈຳນວນ (ຮຸ້ນ)	*ມູນຄ່າ (ກີບ)*	*ຈຳນວນ (ຮຸ້ນ)*	*ມູນຄ່າ (ກີບ)*
ຮຸ້ນທີ່ໄດ້ຮັບອະນຸຍາດ				
ຮຸ້ນທີ່ອອກ ແລະ ຖອກແລ້ວ				
ຮຸ້ນສາມັນ	40,004,000	20,002,000,000	40,004,000	20,002,000,000

ໃນວັນທີ 14 ກຸມພາ 2018, ບໍລິສັດໄດ້ຮັບໜັງສືຢັ້ງຢືນຜົນສຳເລັດການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນຄັ້ງທຳອິດ (IPO) ເລກທີ 0008/ສຄຄຊ ອອກໂດຍສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບລາວ, ເນື່ອງຈາກບໍລິສັດໄດ້ສຳເລັດຂັ້ນຕອນ IPO ໂດຍຮຸ້ນທັງໝົດ 40,004,000 ຮຸ້ນຂອງບໍລິສັດ (ພາຍໃຕ້ຊື່ຮຸ້ນ "LCTC") ຖືກຈົດທະບຽນຢ່າງເປັນທາງການໃນຕະຫຼາດຫຼັກຊັບ.

ໂຄງຮ່າງການຖືຮຸ້ນຂອງບໍລິສັດ ນະວັນທີ 31 ທັນວາ 2025 ແລະ ນະວັນທີ 31 ທັນວາ 2024 ມີດັ່ງນີ້:

	31 ທັນວາ 2025		*31 ທັນວາ 2024*	
ຜູ້ຖືຮຸ້ນ	*ຈຳນວນຮຸ້ນ*	*ເປີເຊັ້ນ*	*ຈຳນວນຮຸ້ນ*	*ເປີເຊັ້ນ*
Yunnan Hengshi Chengrui Holdings Co., Ltd ("Yunnan Qianhan")	14,280,000	35.696%	14,280,000	35.696%
ລັດວິສາຫະກິດພັດທະນາກະສິກຳ-ອຸດ ສາຫະກຳ ແລະ ບໍລິການ ຂາ ອອກ-ຂາເຂົ້າ (DAI)	13,720,000	34.297%	13,720,000	34.297%
ບໍລິສັດຫຼັກຊັບລາວ - ຈີນ (LCS)	7,547,800	18.868%	7,547,800	18.868%
ບໍລິສັດ ມະຫາຊົນ ແລະ ນັກ ລົງທຶນອື່ນໆ	4,456,200	11.139%	4,456,200	11.139%
	40,004,000		**40,004,000**	

17. ລາຍໄດ້ຈາກການດຳເນີນງານອື່ນໆ

	2025 ກີບ	*2024 ກີບ*
ລາຍໄດ້ຈາກການຂາຍວັດຖຸດິບ, ເສດເຫຼັກ ແລະ ຊັບສິນ	478,350,000	16,861,834,986
ເກັບຄືນເງິນແຮໝໍ້ຫອງຍາກ	37,936,200	49,416,000
ເກັບຄືນເງິນແຮສຳລັບເຄື່ອງໃນສາງ	-	8,723,578
ອື່ນໆ	6,327,636	761,229,238
	522,613,836	**17,681,203,801**

18. ລາຍຈ່າຍໃນການດຳເນີນງານອື່ນໆ

ລາຍຈ່າຍສ່ວນໃຫຍ່ແມ່ນຕິດພັນກັບການຢຸດຜະລິດຂອງໂຮງງານມີລາຍລະອຽດດັ່ງລຸ່ມນີ້:

	2025 ກີບ	2024 ກີບ
ລາຍຈ່າຍໃຫ້ພະນັກງານ	2,835,653,508	1,618,218,544
ຄ່າໃຊ້ຈ່າຍໃນການກຳຈັດວັດຖຸດິບ	1,646,928,397	1,422,498,305
ຄ່າໃຊ້ຈ່າຍຫ້ານລ້າງວັດຖຸດິບອອກ	1,058,480,387	158,767,606
ສາທາລະນຸປະໂພກ ແລະ ນ້ຳມັນ	709,318,500	-
ອື່ນໆ	122,086,596	482,240,273
	6,372,467,388	**3,681,724,728**

19. ລາຍຈ່າຍໃນການບໍລິຫານ

	2025 ກີບ	2024 ກີບ
ລາຍຈ່າຍໃຫ້ພະນັກງານ	9,693,906,039	7,533,688,632
ລາຍຈ່າຍຄ່າຫຼຸ້ຍຫ້ຽນ	369,458,779	393,386,912
ລາຍຈ່າຍຄ່າສາທາລະນຸປະໂພກ ແລະ ນ້ຳມັນ	502,019,170	490,971,248
ລາຍຈ່າຍຄ່າເຊົ່າ	294,960,697	271,783,098
ລາຍຈ່າຍຄ່າບຳລຸງຮັກສາ	674,780,663	300,279,071
ລາຍຈ່າຍຄ່າເດີນທາງ	386,405,539	170,201,458
ລາຍຈ່າຍຕ້ອນຮັບແຂກ ແລະ ການບັນເທີງ	101,381,910	774,172,302
ລາຍຈ່າຍຄ່າກວດສອບບັນຊີ	829,617,250	840,447,300
ລາຍຈ່າຍໃນການບໍລິຫານອື່ນໆ	1,971,484,284	1,554,187,385
ລາຈ່າຍທີ່ປຶກສາດ້ານກົດໝາຍ & ຄ່າວິຊາການ	-	375,993,000
ລາຍຈ່າຍສະສາງໜີ້ຕ້ອງຮັບທາງການຄ້າ	-	497,235,697
ລາຍຈ່າຍຄ່າເສື່ອມມູນຄ່າສຳລັບຊັບສິນພວມກໍ່ສ້າງ	-	5,966,361,212
	14,824,014,331	**19,168,707,315**

20. ຕົ້ນທຶນທາງການເງິນ

	2025 ກີບ	2024 ກີບ
ລາຍຈ່າຍດອກເບ້ຍ	1,258,272,210	-
ຂາດທຶນສຸດທິຈາກອັດຕາແລກປ່ຽນ	1,339,046,286	-
	2,597,318,496	**-**

21. ອາກອນກຳໄລ

ອີງຕາມກົດໝາຍວ່າດ້ວຍອາກອນກຳໄລ ເລກທີ 67/ສພຊ ນະວັນທີ 18 ມິຖຸນາ 2019 ເຊິ່ງມີຜົນບັງຄັບໃຊ້ສຳລັບໄລຍະຈາກ ວັນທີ 1 ມັງກອນ 2020, ອາກອນກຳໄລປົກກະຕິ ("ກລ") ໃນອັດຕາ 20%. ນອກຈາກນີ້, ບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບຈະໄດ້ຮັບອັດຕາສ່ວນຫຼຸດ 13% ສຳລັບໄລຍະສີ່ປີນັບແຕ່ວັນທີ່ຈົດທະບຽນ. ດັ່ງນັ້ນ, ອັດຕາອາກອນທີ່ບໍລິສັດຕ້ອງເສຍໃນປີ 2025 ແມ່ນ 20% (ປີ 2024: 20%).

ການມອບອາກອນຂອງບໍລິສັດ ແມ່ນຈະຖືກກວດສອບໂດຍເຈົ້າໜ້າທີ່ສ່ວຍສາອາກອນ. ການນຳໃຊ້ກົດໝາຍວ່າດ້ວຍສ່ວຍສາອາກອນ ແລະ ກົດລະບຽບຕ່າງໆມີການຕີຄວາມໝາຍທີ່ແຕກຕ່າງກັນ, ມູນຄ່າທີ່ລາຍງານໃນເອກະສານລາຍງານການເງິນແບບແຍກກິດຈະການອາດຈະປ່ຽນແປງພາຍຫຼັງເອກະສານລາຍງານການເງິນຖືກກວດກາໂດຍເຈົ້າໜ້າທີ່ສ່ວຍສາອາກອນ.

ໜີ້ຕ້ອງສົ່ງອາກອນພາຍໃນປີແມ່ນອີງຕາມອາກອນກຳໄລຕ້ອງຈ່າຍໃນປີ. ໜີ້ສິນອາກອນພາຍໃນປີຂອງບໍລິສັດຖືກຄິດໄລ່ໂດຍການນຳໃຊ້ອັດຕາອາກອນທີ່ໄດ້ຖືກປະກາດໃຊ້ໃນມື້ອອກໃບລາຍງານຖານະການເງິນແບບແຍກກິດຈະການ.

ການຄາດຄະເນ ອາກອນກຳໄລກ່ອນຖືກສະແດງຢູ່ຂ້າງລຸ່ມນີ້:

ສະກຸນເງິນ: ກີບ

	2025	2024
ຂາດທຶນກ່ອນຫັກອາກອນ	**(23,271,078,181)**	**(4,794,154,327)**
ດັດແກ້ເພື່ອຫຼຸດຂາດທຶນກ່ອນຫັກອາກອນ:		
ຫັກເງິນແຮ/(ເກັບຄືນເງິນແຮ)ສຳລັບເຄື່ອງໃນສາງ	2,835,653,508	(8,723,578)
ເກັບຄືນເງິນແຮໜີ້ທວງຍາກ	(37,936,200)	(49,416,000)
ລາຍຈ່າຍອື່ນໆທີ່ບໍ່ອະນຸຍາດໃຫ້ຫັກ	1,706,968,085	7,576,260,204
ໃຊ້ປະໂຫຍດຈາກການສູນເສຍພາສີທີ່ຍົກໄປຂ້າງໜ້າ	-	2,723,966,299
ຄາດຄະເນອາກອນຂາດທຶນຕ້ອງມອບໃນປີ	**(18,766,392,788)**	**-**
ຄາດຄະເນລ່ວງໜ້າອາກອນກຳໄລພາຍໃນປີໃນອັດຕາ 20% (2024: 20%)		
ອາກອນກຳໄລຕ້ອງຈ່າຍຕົ້ນປີ	479,656,526	479,656,526
ອາກອນກຳໄລທີ່ໄດ້ຈ່າຍໃນປີ	-	-
ອາກອນກຳໄລຕ້ອງຈ່າຍທ້າຍປີ (ບົດອະທິບາຍເລກທີ 14)	**479,656,526**	**479,656,526**

21. ອາກອນກຳໄລ (ຕໍ່)

ຂາດທຶນທາງອາກອນຍົກໄປຫັກຕໍ່

ສຳລັບການຂາດທຶນທາງອາກອນເກີດຂຶ້ນໃນປີ 2020 ແລະ ໃນປີຕໍ່ໜ້າ, ອີງຕາມກົດໝາຍອາກອນສະບັບເລກທີ 67/ສພຊ ລົງວັນທີ 18 ມິຖຸນາ 2019, ມາດຕາທີ 23, ຂາດທຶນປະຈຳປີເຊິ່ງໄດ້ຮັບການຮັບຮອງໂດຍໜ່ວຍງານກວດສອບ ຫຼື ບໍລິສັດກວດສອບບັນຊີອິດສະຫຼະ ແລະ ໄດ້ຮັບການຍອມຮັບຈາກເຈົ້າໜ້າທີ່ສ່ວຍສາອາກອນ, ມີສິດຍົກໄປຫັກຕໍ່ກັບອາກອນກຳໄລໃນຊ່ວງໄລຍະເວລາ 5 ປີ ຫລັງຈາກເກີດການຂາດທຶນທາງອາກອນ.

ນະວັນທີໃນລາຍງານຖານະການເງິນແບບແຍກກິດຈະການ, ບໍລິສັດ ມີຂາດທຶນທາງອາກອນສະສົມທີ່ສາມາດຫັກຕໍ່ກັບລາຍໄດ້ທາງອາກອນໃນອະນາຄົດ. ລາຍລະອຽດດັ່ງລຸ່ມນີ້:

ສະກຸນເງິນ: ກີບ

ປີທີເລີ່ມຕົ້ນ	*ສາມາດນຳໃຊ້ຮອດປີ*	*ມູນຄ່າຂາດທຶນທາງອາກອນ*	*ນຳໃຊ້ຮອດວັນທີ 31 ທັນວາ 2025*	*ໝົດກຳນົດນຳໃຊ້*	*ບໍ່ທັນນຳໃຊ້ນະວັນທີ 31 ທັນວາ 2025*
2020	2025	34,611,776,360	(2,723,966,299)	(31,887,810,061)	-
2021	2026	12,384,451,613		-	12,384,451,613
2022	2027	13,325,630,431	-	-	13,325,630,431
2023	2028	1,335,364,138	-	-	1,335,364,138
2025	2030	18,766,392,788	-	-	18,766,392,788
ລວມ		**80,423,615,330**	**(2,723,966,299)**	**(31,887,810,061)**	**45,811,838,970**

ການຂາດທຶນທາງອາກອນທີ່ຄາດຄະເນຕາມການເປີດເຜີຍອາກອນກຳໄລຂອງບໍລິສັດ ແມ່ນຍັງບໍ່ໄດ້ຮັບການກວດສອບຈາກເຈົ້າໜ້າທີ່ສ່ວຍສາອາກອນທ້ອງຖິ່ນ ນະວັນທີຂອງເອກະສານລາຍງານການເງິນແບບແຍກກິດຈະການ.

ບໍ່ມີການຮັບຮູ້ອາກອນລໍຖ້າສະສາງຊັບສິນທີ່ເຫຼືອ 45,811,838,970 ກີບ ເນື່ອງຈາກບໍ່ສາມາດລະບຸລາຍໄດ້ທີ່ຕ້ອງເສຍອາກອນໃນອະນາຄົດໄດ້ໃນຂະນະນີ້.

22. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ ແມ່ນການປະຕິບັດທາງສັນຍາຕາມລາຄາທີ່ໄດ້ຕົກລົງກັນໄວ້. ລາຍການເຄື່ອນໄຫວທີ່ສຳຄັນກັບພາກສ່ວນທີ່ກ່ຽວຂ້ອງມີດັ່ງລຸ່ມນີ້:

ພາກສ່ວນທີ່ກ່ຽວຂ້ອງ	*ສາຍພົວພັນ*	*ລາຍການເຄື່ອນໄຫວ*	*2025 ກີບ*	*2024 ກີບ*
ບໍລິສັດພັດທະນາກະສິກຳ ວິທະຍາສາດ ແລະ ເຕັກໂນໂລຊີ ລາວ ຈຳກັດ	ບໍລິສັດໃນເຄືອ	ການຊຳລະໃນນາມ	708,007	9,929,969
ບໍລິສັດ ກໍ່ສ້າງ ພັດທະນາ ຕິວເມືອງລາວ ຈຳກັດ	ບໍລິສັດໃນເຄືອ	ການຊຳລະໃນນາມ	1,915,579,852	1,306,319,572
ບໍລິສັດ ວັດສະດຸກໍ່ສ້າງໃຫມ່ ລາວ ຈຳກັດຜູ້ດຽວ	ບໍລິສັດໃນເຄືອ	ການຊຳລະໃນນາມ	7,222,000	849,000
ບໍລິສັດ ສະຖາບັນຜ່ວນການ ແລະ ການອອກແບບທ່ອງ ທ່ຽວແຫ່ງຊາດລາວ ຈຳກັດຜູ້ ດຽວ	ບໍລິສັດໃນເຄືອ	ການຊຳລະໃນນາມ	51,923,950	4,320,000
ບໍລິສັດ ບໍລິການວາງສະແດງ ສາກົນລາວ ຈຳກັດຜູ້ດຽວ	ບໍລິສັດໃນເຄືອ	ການຊຳລະໃນນາມ	(2,510,000)	2,510,000
ບໍລິສັດ ພັດທະນາ ຊັບພະຍາກອນບໍ່ແຮ່ລາວ ຈຳກັດຜູ້ດຽວ	ບໍລິສັດໃນເຄືອ	ການຊຳລະໃນນາມ	11,924,500	1,635,656,000
ບໍລິສັດ ສະຖາບັນສຳຫຼວດ ແລະ ອອກແບບແຫ່ງຊາດ ລາວ ຈຳກັດຜູ້ດຽວ	ບໍລິສັດໃນເຄືອ	ການຊຳລະໃນນາມ	7,227,000	4,100,000
ບໍລິສັດ ສູນຝຶກອົບຮົມ ແລະ ການສຶກສາ (ລາວ) ຈຳກັດຜູ້ ດຽວ	ບໍລິສັດໃນເຄືອ	ການຊຳລະໃນນາມ	7,192,000	2,550,000
ບໍລິສັດ ການດຳເນີນແລະ ການບໍລິຫານ ເຂດທ່ອງທ່ຽວ ພູພະບິດ ຈຳກັດຜູ້ດຽວ	ບໍລິສັດໃນເຄືອ	ເງິນກູ້ຢືມ	9,852,000	-
ບໍລິສັດ ເຄື່ອງຈັກ ແລະ ອຸປະກອນວິສະວະກຳ ຈຳກັດ ຜູ້ດຽວ	ບໍລິສັດໃນເຄືອ	ຊຳລະເງິນກູ້ຢືມຄືນ	5,557,500	-
ທ່ານ ເນ້ຍ ເຫຼີຍ	ຜູ້ອຳນວຍການ ໃຫຍ່	ເງິນກູ້ຢືມ	2,191,519,212	3,605,450,000
	ຜູ້ຖືຮຸ້ນ	ການໂອນຫນີ້ສຸດທິຈາກ CYC	-	(561,389,949)
			(611,028,942)	133,573,571
	ຜູ້ຖືຮຸ້ນ	ຊຳລະເງິນກູ້ຢືມຄືນ	(177,792,255)	-

22. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ ແມ່ນການປະຕິບັດ ຕາມລາຄາທີ່ໄດ້ຕົກລົງກັນທາງສັນຍາ. ລາຍການເຄື່ອນໄຫວທີ່ສຳຄັນກັບພາກສ່ວນທີ່ກ່ຽວຂ້ອງມີດັ່ງລຸ່ມນີ້:

ພາກສ່ວນທີ່ກ່ຽວຂ້ອງ	*ສາຍພົວພັນ*	*ລາຍການເຄື່ອນໄຫວ*	*2025 ກີບ*	*2024 ກີບ*
Mr. Li Xue Bing	ຮອງ ຜູ້ອຳນວຍການ ໃຫຍ່	ເງິນກູ້ຢືມ	-	3,835,590,000
		ຊຳລະເງິນກູ້ຢືມຄືນ	(20,443,500)	-
Mr. Ding Yu Dong	ຜູ້ອຳນວຍການ	ເງິນກູ້ຢືມຄືນ	141,630,000	58,370,000
HK XIANGHUA LIMITED NO4	ພາກສ່ວນທີ່ ກ່ຽວຂ້ອງ	ເງິນກູ້ຢືມຄືນ	9,018,240,000	6,501,000,000
	ພາກສ່ວນທີ່ ກ່ຽວຂ້ອງ	ລາຍຈ່າຍດອກເບ້ຍຈາກ ເງິນກູ້ຢືມ	1,256,361,539	-

ຍອດໜີ້ຕ້ອງຮັບຈາກພາກສ່ວນທີ່ກ່ຽວຂ້ອງ ນະວັນທີ 31 ທັນວາ 2025 ແລະ ວັນທີ 31 ທັນວາ 2024 ດັ່ງລຸ່ມນີ້:

ພາກສ່ວນທີ່ກ່ຽວຂ້ອງ	*ສາຍພົວພັນ*	*ລາຍການເຄື່ອນໄຫວ*	*31 ທັນວາ 2025 ກີບ*	*31 ທັນວາ 2024 ກີບ*
ມູນຄ່າຕ້ອງຮັບຈາກພາກສ່ວນທີ່ກ່ຽວຂ້ອງ				
Yunnan Hengshi Chengrui Holdings Co., Ltd ("Yunnan Qianhan")	ບໍລິສັດໃນເຄືອ	ເງິນລ່ວງໜ້າ	1,000,000,000	1,000,000,000
ບໍລິສັດພັດທະນາກະສິກຳ ວິທະຍາສາດ ແລະ ເຕັກໂນໂລຊີ ລາວ ຈຳກັດ	ບໍລິສັດໃນເຄືອ	ເງິນລ່ວງໜ້າ	27,147,777	26,439,770
ບໍລິສັດ ກໍ່ສ້າງ ພັດທະນາ ຕິວ ເມືອງລາວ ຈຳກັດ	ບໍລິສັດໃນເຄືອ	ເງິນລ່ວງໜ້າ	2,069,446,192	153,866,340
ບໍລິສັດ ວັດສະດຸກໍ່ສ້າງໃຫມ່ ລາວ ຈຳກັດຜູ້ດຽວ	ບໍລິສັດໃນເຄືອ	ເງິນລ່ວງໜ້າ	22,057,500	14,835,500
ບໍລິສັດ ສະຖາບັນແຜນການ ແລະ ການອອກແບບທ່ອງທ່ຽວ ແຫ່ງຊາດລາວ ຈຳກັດຜູ້ດຽວ	ບໍລິສັດໃນເຄືອ	ເງິນລ່ວງໜ້າ	59,923,950	8,000,000
ບໍລິສັດ ບໍລິການວາງສະແດງ ສາກົນລາວ ຈຳກັດຜູ້ດຽວ	ບໍລິສັດໃນເຄືອ	ເງິນລ່ວງໜ້າ	9,852,000	2,510,000
ບໍລິສັດ ພັດທະນາ ຊັບພະຍາກອນບໍ່ແຮ່ລາວ ຈຳກັດຜູ້ດຽວ	ບໍລິສັດໃນເຄືອ	ເງິນລ່ວງໜ້າ	1,647,580,500	1,635,656,000
ບໍລິສັດ ສະຖາບັນສຳຫຼວດ ແລະ ອອກແບບແຫ່ງຊາດລາວ ຈຳກັດຜູ້ດຽວ	ບໍລິສັດໃນເຄືອ	ເງິນລ່ວງໜ້າ	11,327,000	4,100,000

22. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

ຍອດເຫຼືອໜີ້ຕ້ອງຮັບຈາກພາກສ່ວນທີ່ກ່ຽວຂ້ອງ ນະວັນທີ 31 ທັນວາ 2025 ແລະ ວັນທີ 31 ທັນວາ 2024 ດັ່ງລຸ່ມນີ້:

ພາກສ່ວນທີ່ກ່ຽວຂ້ອງ	*ສາຍພົວພັນ*	*ລາຍການເຄື່ອນໄຫວ*	*31 ທັນວາ 2025 ກີບ*	*31 ທັນວາ 2024 ກີບ*
ມູນຄ່າຕ້ອງຮັບຈາກພາກສ່ວນທີ່ກ່ຽວຂ້ອງ				
ບໍລິສັດ ສູນຝຶກອົບຮົມ ແລະ ການສຶກສາ (ລາວ) ຈຳກັດຜູ້ດຽວ	ບໍລິສັດໃນເຄືອ	ເງິນລ່ວງໜ້າ	9,742,000	2,550,000
	ບໍລິສັດໃນເຄືອ	ເງິນລ່ວງໜ້າ	9,852,000	-
	ບໍລິສັດໃນເຄືອ	ເງິນລ່ວງໜ້າ	5,557,500	-
			4,862,634,419	**2,847,957,610**

ພາກສ່ວນທີ່ກ່ຽວຂ້ອງ	*ສາຍພົວພັນ*	*ລາຍການເຄື່ອນໄຫວ*	*31 ທັນວາ 2025 ກີບ*	*31 ທັນວາ 2024 ກີບ*
ມູນຄ່າໜີ້ຕ້ອງສົ່ງໃຫ້ພາກສ່ວນທີ່ກ່ຽວຂ້ອງ				
Yunnan Hengshi Chengrui Holdings Co., Ltd ("Yunnan Qianhan")	ຜູ້ຖືຮຸ້ນ	ໂອນໜີ້ສຸດທິຈາກ CYC	2,742,855,492	3,353,884,434
		ກູ້ຢືມ (*)	55,072,855	232,865,110
ລັດວິສາຫະກິດພັດທະນາ ກະສິກຳ-ອຸດ ສາຫະກຳ ແລະ ບໍລິການຂາອອກ-ຂາເຂົ້າ (DAI)	ຜູ້ຖືຮຸ້ນ	ຈັດຊື້ວັດຖຸດິບ	4,374,818,540	4,374,818,540
ບໍລິສັດ ກໍ່ສ້າງ ພັດທະນາ ຕິວເມືອງລາວ ຈຳກັດ	ບໍລິສັດໃນເຄືອ	ໜີ້ຕ້ອງສົ່ງ	3,086,826,068	1,320,000,000
ທ່ານ ເນ້ຍ ເຫຼີຍ	ຜູ້ອຳນວຍການໃຫຍ່	ກູ້ຢືມ (*)	5,796,969,212	3,605,450,000
			16,056,542,166	**12,887,018,084**
ໜີ້ຕ້ອງສົ່ງອື່ນໆ (ບົດອະທິບາຍເລກທີ 15)				
Yunnan Hengshi Chengrui Holdings Co., Ltd ("Yunnan Qianhan")	ຜູ້ຖືຮຸ້ນ	ໜີ້ຕ້ອງສົ່ງເງິນປັນຜົນ	7,736,383,104	7,736,383,104
ລັດວິສາຫະກິດພັດທະນາ ກະສິກຳ-ອຸດ ສາຫະກຳ ແລະ ບໍລິການຂາອອກ-ຂາເຂົ້າ (DAI)	ຜູ້ຖືຮຸ້ນ	ໜີ້ຕ້ອງສົ່ງເງິນປັນຜົນ	5,844,980,856	5,844,980,856
			13,581,363,960	**13,581,363,960**

22. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

ພາກສ່ວນທີ່ກ່ຽວຂ້ອງ	*ສາຍພົວພັນ*	*ລາຍການເຄື່ອນໄຫວ*	*31 ທັນວາ 2025 ກີບ*	*31 ທັນວາ 2024 ກີບ*
ມູນຄ່າໜີ້ຕ້ອງສົ່ງໃຫ້ພາກສ່ວນທີ່ກ່ຽວຂ້ອງ				
ທ່ານ ລີ ເຊ່ຍ໋ປິ້ງ	ຮອງອຳນວຍການ	ກູ້ຢືມ (*)	3,815,146,500	3,835,590,000
ທ່ານ ຫວາງ ຮຸ້ຍ	ອຳນວຍການ	ກູ້ຢືມ (*)	-	222,564,810
ທ່ານ ຕິ້ງ ຢ໋ຕິ້ງ	ອຳນວຍການ	ກູ້ຢືມ (*)	200,000,000	58,370,000
ເຮັສເຄ ຊຽງຮ້ໍ ຈຳກັດ ເລກທີ 04	ພາກສ່ວນກ່ຽວຂ້ອງ	ກູ້ຢືມ (**)	15,519,240,000	6,501,000,000
ເຮັສເຄ ຊຽງຮ້ໍ ຈຳກັດ ເລກທີ 04	ພາກສ່ວນກ່ຽວຂ້ອງ	ໜີ້ຕ້ອງສົ່ງລາຍຈ່າຍດອກເບ້ຍ	1,256,361,539	-
			20,790,748,039	**10,617,524,810**

(*) ການກູ້ຢືມນີ້ສະແດງເຖິງການກູ້ຢືມບໍ່ມີຫຼັກຊັບຄ້ຳປະກັນ, ທີ່ບໍ່ມີດອກເບ້ຍ, ບໍ່ກຳນົດໄລຍະເວລາ

(**) ດອກເບ້ຍໃນອັດຕາ 10% ຕໍ່ປີ ແລະ ຈ່າຍຄືນເງິນຕົ້ນທຶນພ້ອມດອກເບ້ຍເປັນເງິນກ້ອນເມື່ອຄົບກຳນົດໃນວັນທີ 11 ມີນາ 2026.

ລາຍການເຄື່ອນໄຫວອື່ນໆຂອງພາກສ່ວນທີ່ກ່ຽວຂ້ອງ

ຄ່າຕອບແທນໃຫ້ຄະນະອຳນວຍການພາຍໃນໄລຍະມີດັ່ງລຸ່ມນີ້:

	31 ທັນວາ 2025 ກີບ	*31 ທັນວາ 2024 ກີບ*
ເງິນເດືອນ	2,149,874,441	2,450,936,558
	2,149,874,441	**2,450,936,558**

24. ພັນທະສັນຍາ

ນະວັນທີ 31 ທັນວາ 2025, ກຸ່ມບໍລິສັດດັ່ງກ່າວໄດ້ລົງນາມໃນສັນຍາຮ່ວມມືລົງທຶນໂຄງການກໍ່ສ້າງ 21 ພາຍໃຕ້ຕາມສັນຍາສະບັບເລກທີ LCTC-E25011 ກັບຜູ້ລົງທຶນບໍລິສັດ ລາວໄຈ່ວຊິ້ງ ອຸດສາຫະກຳ ຈຳກັດ ("LYX"). ດ້ວຍເຫດນັ້ນ, ໃນຊຸມປີຕໍ່ໜ້າ, ກຸ່ມບໍລິສັດໄດ້ຕົກລົງຈະຈ່າຍ LYX 8 ລ້ານໂດລາ ໃຫ້ແກ່ການຂາຍອາຄານ, ພ້ອມກັບຈຳນວນເງິນເພີ່ມເຕີມອີກ 4 ລ້ານໂດລາ ໂດຍອີງໃສ່ຜົນກຳໄລຂອງໂຄງການ.

ບໍລິສັດມີບໍລິສັດໃນເຄືອ 8 ບໍລິສັດ ດ້ວຍທຶນຈົດທະບຽນທັງໝົດ 43 ຕື້ກີບ. ນະວັນທີ 31 ທັນວາ 2025, ບໍລິສັດໄດ້ລົງທຶນ 5.8 ຕື້ກີບໃຫ້ແກ່ບໍລິສັດຍ່ອຍ ແລະ ທຶນທັງໝົດທີ່ຍັງບໍ່ໄດ້ປະກອບສ່ວນເຂົ້າໃນພັນທະທຶນຂອງບໍລິສັດຍ່ອຍແມ່ນ 37.2 ຕື້ກີບ.

25. ເຫດການພາຍຫຼັງວັນທີຂອງໃບລາຍງານຖານະການເງິນ

ບໍ່ໄດ້ມີເຫດການໃດທີ່ສຳຄັນເກີດຂຶ້ນຫຼັງຈາກວັນທີ 31 ທັນວາ 2025 ທີ່ຮຽກຮ້ອງໃຫ້ມີການດັດແກ້ ຫຼື ເປີດເຜີຍໃນ ເອກະສານລາຍງານການເງິນແບບແຍກກິດຈະການ.

26. ການອະນຸມັດອອກເອກະສານລາຍງານການເງິນ

ເອກະສານລາຍງານການເງິນແບບແຍກກິດຈະການນະວັນທີ ແລະ ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2025 ແມ່ນໄດ້ຖືກ ອະນຸມັດໂດຍຄະນະອຳນວຍການຂອງບໍລິສັດ ໃນວັນທີ 31 ມີນາ 2026.

ທ່ານ ເນ້ຍ ເຫຼຍ
ຜູ້ອຳນວຍການໃຫຍ່

ທ່ານ ຈ່າງ ຈິ່ງຫົວ
ຮອງຫົວໜ້າບັນຊີ ແລະ ການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

30 ມີນາ 2026